ວາລະສານ

# ການຄ້າ ລາວ

ກະຊວງອຸດສາຫະກຳ ແລະ ການຄ້າ ກົມນະໂຍບາຍການຄ້າຕ່າງປະເທດ

ສະບັດທີ: 4 ເດືອນ ມັງກອນ 2011

**ສປປລາວ ກຽມເປັນເຈົ້າພາບ**
ຈັດກອງປະຊຸມລັດຖະມົນຕີ
ເສດຖະກິດອາຊຽນແບບ
ວົງແຄບໃນທ້າຍເດືອນ
ກຸມພາ 2011
ທີ່ນະຄອນຫຼວງວຽງຈັນ



**ການຮ່ວມມືດ້ານການຄ້າ ລະຫວາງ ສປປ ລາວ ແລະ ສປ ຈີນ ໃນປະຈຸບັນ**



**ຄວາມໝາຍ ແລະ ຄວາມສຳຄັນຂອງການອຳນວຍຄວາມສະດວກທາງດ້ານການຄ້າ**

# ສາລະບານ


**ໜ້າທີ 4**

ສປປລາວ ກຽມເປັນເຈົ້າພາບຈັດກອງປະຊຸມລັດຖະມົນຕີເສດຖະກິດອາຊຽນແບບວົງແຄບ ໃນທ້າຍເດືອນ ກຸມພາ 2011 ທີ່ນະຄອນຫຼວງວຽງຈັນ

**ໜ້າທີ 5-7**

ການຮ່ວມມືດ້ານການຄ້າ ລະຫວ່າງ ສປປ ລາວ ແລະ ສປ ຈີນ ໃນປະຈຸບັນ

**ໜ້າທີ 8-9**

ການປະເມີນມູນຄ່າແຈ້ງເສຍພາສີ

**ໜ້າທີ 10-13**

ໂຄງການສ້າງສູນບໍລິການຕັດຫຍິບ ແລະ ໂຄງການສົ່ງເສີມການຜະລິດເສັ້ນໃໝແບບຍືນຍົງ

**ໜ້າທີ 14-16**

ຄວາມໝາຍ ແລະ ຄວາມສຳຄັນຂອງການອຳນວຍຄວາມສະດວກທາງດ້ານການຄ້າ

**ໜ້າທີ 17-18**

ການພັດທະນາວຽກງານ ໜຶ່ງເມືອງໜຶ່ງຜະລິດຕະພັນ (ODOP)

**ໜ້າທີ 19-20**

ບົດວິໄຈການເຊື່ອມໂຍງເຂົ້າສາກົນທາງການຄ້າຂອງ ສປປ ລາວ

**ໜ້າທີ 21-22**

ທິດທາງການນຳເຂົ້າ ແລະສົ່ງອອກ ຂອງ ສປປ ລາວ


ຂໍຕ້ອນຮັບບັນດາທ່ານຜູ້ອ່ານສູ່ **ວາລະສານການຄ້າລາວ** ສະບັບທີ 4 ປະຈຳເດືອນມັງກອນ 2011.

ວາລະສານສະບັບທີ 4 ນີ້ ຍັງຄົງສືບຕໍ່ໃຫ້ຂໍ້ມູນຂ່າວສານວຽກງານດ້ານການຄ້າແກ່ບັນດາທ່ານ ເຊິ່ງໄດ້ສະແດງໃຫ້ເຫັນເຖິງຄວາມພະຍາຍາມຂອງລັດຖະບານໃນການພັດທະນາວຽກງານການຄ້າຢ່າງຕໍ່ເນື່ອງ. ບັນດາຫົວຂໍ້ຫລັກໃນວາລະສານສະບັບນີ້ ປະກອບດ້ວຍການກະກຽມວຽກງານການປັບປຸງບົດວິໄຈການເຊື່ອມໂຍງເຂົ້າສາກົນທາງການຄ້າ (Lao Diagnostic Trade Integration Study) ເຊິ່ງຈະລວມເຖິງການສຶກສາບັນດາທ່າແຮງ ແລະ ປັດໃຈທ່ວງດຶງທີ່ກ່ຽວພັນກັບວຽກງານການພັດທະນາການຄ້າ. ນອກນີ້, ວາລະສານສະບັບນີ້ຍັງຈະຍົກໃຫ້ເຫັນເຖິງວຽກງານການອຳນວຍຄວາມສະດວກທາງການຄ້າ, ການປະເມີນມູນຄ່າແຈ້ງພາສີ (Custom Valuation Agreement) ພາຍໃຕ້ສັນຍາຂອງອົງການການຄ້າໂລກ, ການສົ່ງເສີມວຽກງານ ‘ໜຶ່ງເມືອງໜຶ່ງຜະລິດຕະພັນ’ ແລະ ບັນດາກິດຈະກຳສົ່ງເສີມຂະແໜງການຄ້າ ແລະ ເອກະຊົນ ເຊັ່ນ ການດຳເນີນໂຄງການພັດທະນາການຜລິດເສັ້ນໃໝແບບຍືນຍົງ ແລະ ໂຄງການສ້າງສູນບໍລິການຕັດຫຍິບ.

ສຸດທ້າຍນີ້, ທີມງານບັນນາທິການວາລະສານການຄ້າລາວຂໍສະແດງຄວາມຂອບໃຈມາຍັງທຸກພາກສ່ວນສຳລັບຄຳຕຳນິຕິຊົມທີ່ຜ່ານມາ ແລະ ທາງທີມງານກໍມີຄວາມຍິນດີທີ່ຈະໄດ້ຮັບຄຳຄິດເຫັນຈາກບັນດາທ່ານເພື່ອໃຊ້ເປັນແນວທາງໃນການພັດທະນາ ວາລະສານການຄ້າລາວ ໃຫ້ມີຄວາມສົມບູນດ້ານເນື້ອໃນຂັ້ນຕໍ່ໄປ.


ກະຊວງອຸດສາຫະກຳ ແລະ ການຄ້າ
ກົມນະໂຍບາຍການຄ້າຕ່າງປະເທດ

ຖະໜົນໂພນໄຊ, ຕູ້ ປ.ນ 4107,
ນະຄອນຫຼວງວຽງຈັນ ສປປ ລາວ
ໂທ/ແຟັກ: (856 21) 41 3916
info@laosaft.org
www.laosaft.org



ສະໜັບສະໜູນໂດຍ: ໂຄງການ EIF

# ສປປລາວ

## ກຽມເປັນເຈົ້າພາບຈັດກອງປະຊຸມລັດຖະມົນຕີເສດຖະກິດອາຊຽນແບບວົງແຄບ ໃນທ້າຍເດືອນກຸມພາ 2011 ທີ່ ນະຄອນຫຼວງວຽງຈັນ

*ໂດຍ: ພະແນກຮ່ວມມືເສດຖະກິດອາຊຽນ, ກົມນະໂຍບາຍການຄ້າຕ່າງປະເທດ*

ສປປລາວ ໄດ້ຮັບກຽດເປັນເຈົ້າພາບຈັດກອງປະຊຸມລັດຖະມົນຕີເສດຖະກິດອາຊຽນແບບວົງແຄບ (AEM Retreat) ຄັ້ງທີ 17 ປະຈຳປີ 2011 ຊຶ່ງຄາດວ່າຈະຈັດໃນທ້າຍເດືອນ ກຸມພາ 2011. ປົກກະຕິແລ້ວ, ກອງປະຊຸມ AEM Retreat ຈະຈັດຢູ່ໃນທຸກໆໄຕມາດທີໜຶ່ງຂອງທຸກໆປີ, ສ່ວນກອງປະຊຸມປະຈຳປີຂອງລັດຖະມົນຕີເສດຖະກິດອາຊຽນ ແລະ ລັດຖະມົນຕີເສດຖະກິດອາຊຽນກັບປະເທດຄູ່ເຈລະຈາ (AEM) ແມ່ນຈັດຢູ່ໃນໄລຍະທີກເດືອນທ້າຍປີ, ໂດຍສ່ວນໃຫຍ່ຈະແມ່ນໃນທ້າຍເດືອນສິງຫາຂອງທຸກໆປີ. ສປປ ລາວ ເຄີຍເປັນເຈົ້າພາບຈັດກອງປະຊຸມລັດຖະມົນຕີເສດຖະກິດອາຊຽນແບບວົງແຄບມາຄັ້ງໜຶ່ງໃນປີ 2003 ທີ່ຫຼວງພະບາງ.

ທຳນຽມປະຕິບັດແລະຈຸດພິເສດຂອງກອງປະຊຸມແບບວົງແຄບນີ້, ຈະບໍ່ມີກອງປະຊຸມປຶກສາຫາລືກັບປະເທດຄູ່ເຈລະຈາອາຊຽນ, ແຕ່ຈະມີໃນເວລາປະຊຸມ AEM ປະຈຳປີ. ກອງປະຊຸມ AEM Retreat ສ້າງໂອກາດໃຫ້ລັດຖະມົນຕີເສດຖະກິດພາຍໃນອາຊຽນໄດ້ເຂົ້າຮ່ວມຫາລືກັນດ້ວຍບັນຍາກາດແບບກັນເອງ, ຊຶ່ງການຫາລືແມ່ນກອມເອົາໝົດບັນດາວຽກງານເສດຖະກິດອາຊຽນທີ່ຍັງຄ້າງຄາ, ປະເດັນໃດສາມາດຕົກລົງກັນໄດ້ກໍຕັດສິນໄປເລີຍ ພ້ອມນັ້ນກໍໃຫ້ທິດຊີ້ນຳ ແກ່ເຈົ້າໜ້າທີ່ອາວຸໂສເສດຖະກິດອາຊຽນ (SEOM) ເພື່ອໃຊ້ເປັນແນວທາງດຳເນີນການແກ້ໄຂວຽກງານຕ່າງໆທີ່ຍັງຄ້າງຄາດັ່ງກ່າວ, ໂດຍສະເພາະແມ່ນການປະຕິບັດພັນທະຂອງແຕ່ລະປະເທດສະມາຊິກ ຕາມເວລາທີ່ໄດ້ກຳນົດໄວ້ຢູ່ໃນແຜນແມ່ບົດ ການສ້າງປະຊາຄົມເສດຖະກິດອາຊຽນ.

ການເປັນເຈົ້າພາບຂອງ ສປປ ລາວ ຄັ້ງນີ້ ກໍແມ່ນໄດ້ຜ່ານການຕົກລົງຂອງກອງປະຊຸມ AEM Retreat ຄັ້ງທີ່ຜ່ານມາທີ່ ເມືອງປຸດຕຣາຈາຍຢາ ນະຄອນຫຼວງໃໝ່ຂອງປະເທດມາເລເຊຍ. ການຮັບເປັນເຈົ້າພາບຄັ້ງນີ້ຈະເປັນການສະແດງຄວາມມີນ້ຳໃຈຂອງ ສປປລາວ ແລະ ຈະເປັນການສ້າງຄວາມອາດສາມາດໃນການເປັນເຈົ້າພາບກອງປະຊຸມໃນຕົວ ແລະ ມີກຽດ, ພ້ອມນີ້ກໍຈະເປັນການໂຄສະນາເຜີຍແຜ່ໃຫ້ຕ່າງປະເທດໄດ້ຮັບຮູ້ເຖິງຄວາມກ້າວໜ້າທາງການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ເພື່ອເປັນການດຶງດູດການທ່ອງທ່ຽວອີກດ້ວຍ.

# ການຮ່ວມມື

## ດ້ານການຄ້າ ລະຫວ່າງ ສປປ ລາວ ແລະ ສປ ຈີນ ໃນປະຈຸບັນ

*ໂດຍ: ພະແນກນະໂຍບາຍການຄ້າສອງຝ່າຍ, ກົມນະໂຍບາຍການຄ້າຕ່າງປະເທດ*

ການພົວພັນການຄ້າສອງຝ່າຍລະຫວ່າງ ສປປ ລາວ ແລະ ສປ ຈີນ ມີການຂະຫຍາຍຕົວຢ່າງ ໜັ້ນທ່ຽງ ຊຶ່ງສອງຝ່າຍໄດ້ເຊັນສັນຍາການຄ້າ ໃນວັນທີ 11 ມິຖຸນາ 1997 ທີ່ນະຄອນຫຼວງວຽງຈັນ. ສປປ ລາວ ໄດ້ຮັບສິດທິພິເສດຈາກ ສປ ຈີນ ແບບຝ່າຍດຽວ ຈຳນວນ 329 ລາຍການ ໃນປີ 2004 ແລະ ໃນປີ 2008 ໄດ້ອອກມາດຕະການ ເພື່ອສະໜັບສະໜູນການພັດທະນາການຄ້າ ຊຶ່ງໃນນັ້ນ ກໍ່ມີມາດຕະການຍົກເວັ້ນພາສີມູນຄ່າການນຳເຂົ້າສິນຄ້າຂອງປະຊາຊົນຕາມຊາຍແດນຈາກ 3,000 ຂຶ້ນມາເປັນ 8,000 ຢວນ/ຄົນ/ວັນ. ສອງລັດຖະບານໄດ້ວາງຕົວເລກຄາດໝາຍນຳກັນຄື ໃນປີ 2010 ໃຫ້ບັນລຸໄດ້ 1 ຕື້ໂດລາສະຫະລັດ. ສະເພາະ ສປປ ລາວ ແລະ ແຂວງຢຸນນານ ໄດ້ວາງຄາດໝາຍສູ້ຊົນຮ່ວມກັນ ເພື່ອໃຫ້ມູນຄ່າການຄ້າສອງຝ່າຍລາວ-ຢຸນນານ ບັນລຸ 150 ລ້ານໂດລາສະຫະລັດ ໃນປີ 2010.

ໃນໄລຍະສອງປີຜ່ານມາ ສປປ ລາວ ແລະ ສປ ຈີນ ໄດ້ມີການຮ່ວມມືທາງດ້ານການຄ້າຢ່າງຕັ້ງໜ້າ ແລະ ມີບັນຍາກາດທີ່ດີຂຶ້ນຄື: ໄດ້ມີການຈັດກອງປະຊຸມຄະນະກຳມາທິການຮ່ວມມືລາວ- ຈີນ ຄັ້ງທີ IV ໃນເດືອນພຶດສະພາ 2009 ທີ່ ປັກກິ່ງ ສປ ຈີນ, ແລະ ກອງປະຊຸມຄະນະປະສານງານພາກເໜືອລາວ ແລະ ແຂວງຢຸນນານຄັ້ງທີ IV ໃນເດືອນມິຖຸນາ 2009 ທີ່ ຊຽງຮຸ່ງ ສປ ຈີນ. ພ້ອມກັນນັ້ນ, ພາກລັດຂອງສອງປະເທດກໍ່ໄດ້ມີການຢ້ຽມຢາມພົບປະ, ທັດສະນະສຶກສາ ແລະ ແລກປ່ຽນບົດຮຽນ ນຳກັນຢ່າງເປັນປະຈຳ. ນອກນັ້ນ, ນັກທຸລະກິດ ແລະ ບໍລິສັດຕ່າງໆຂອງລາວ ກໍ່ໄດ້ເຂົ້າຮ່ວມງານວາງສະແດງສິນຄ້າຢູ່ ສປ ຈີນ ຢ່າງຕັ້ງໜ້າ, ແລະ ບັນດາບໍລິສັດຂອງຈີນ ກໍ່ໄດ້ເດີນທາງມາ ສປປ ລາວ ເພື່ອພົບປະ ແລະ ຊອກຫາຊ່ອງທາງການຄ້າ ແລະ ການລົງທຶນນັບມື້ນັບຫຼາຍຂຶ້ນ.




*ການພົບປະສອງຝ່າຍລະຫວ່າງຜູ້ແທນຂັ້ນສູງຂອງ ສປປ ລາວ ແລະ ສປ ຈີນ ໃນວັນທີ 16 ມິຖຸນາ 2010 ທີ່ນະຄອນຫລວງວຽງຈັນ*



*ພິທີເຊັນເອກະສານຮ່ວມ ມືດ້ານເສດຖະກິດ ແລະ ການຄ້າລະຫວ່າງລັດຖະບານແຫ່ງ ສປປ ລາວ ແລະລັດຖະບານແຫ່ງ ສປ ຈີນ, 16 ມິຖຸນາ ທີ່ ນະຄອນຫລວງວຽງຈັນ*

ຜ່ານການຮ່ວມມືທີ່ກ່າວມາຂ້າງເທິງໄດ້ເຮັດໃຫ້ເສດຖະກິດການຄ້າຂອງສອງປະເທດ ສືບຕໍ່ຂະຫຍາຍຕົວຢ່າງຕໍ່ເນື່ອງ, ສປ ຈີນ ເປັນຄູ່ຄ້າອັນດັບ 2 ຂອງ ສປປ ລາວ ໃນປີ 2009 ຮອງລົງມາຈາກໄທ. ຊຶ່ງເຫັນໄດ້ວ່າ ໃນປີ 2009 ນີ້ ມູນຄ່າການຄ້າ ລະຫວ່າງ ສອງປະເທດ ບັນລຸໄດ້ 744 ລ້ານໂດລາສະຫະລັດ ເພີ່ມຂຶ້ນ 79% ເມື່ອທຽບໃສ່ຕົວເລກເປົ້າໝາຍ ທີ່ທັງສອງລັດຖະບານໄດ້ວາງໄວ້ໃນປີ 2010 ໃຫ້ບັນລຸໄດ້ 1 ຕື້ ໂດລາສະຫະລັດ ແມ່ນຖືວ່າໃກ້ຈະບັນລຸຕາມເປົ້າໝາຍ. ສະເພາະ 10 ເດືອນຕົ້ນປີ 2010 ນີ້ ມູນຄ່າການຄ້າ ລະຫວ່າງສອງປະເທດ ບັນລຸໄດ້ 844,64 ລ້ານໂດລາສະຫະລັດ ເພີ່ມຂຶ້ນ 46,2%, ໃນນັ້ນການນຳເຂົ້າມີມູນຄ່າ 392,40 ລ້ານໂດລາສະຫະລັດ ເພີ່ມຂຶ້ນ 39,1% (ຍ້ອນສິນຄ້ານຳເຂົ້າຮັບໃຊ້ໂຄງການລົງທຶນ, ສິນຄ້ານຳເຂົ້າເພື່ອຈຳໜ່າຍທົ່ວໄປ: ອາໄຫຼ່ລົດທຸກຊະນິດ, ອຸປະກອນໄຟຟ້າ ແລະ ເຄື່ອງນຸ່ງຫົ່ມ ແລະ ເຄື່ອງໃຊ້ສອຍປະຈຳວັນ ເພີ່ມຂຶ້ນ). ການສົ່ງອອກມີມູນຄ່າ 452,24 ລ້ານໂດລາສະຫະລັດ ເພີ່ມຂຶ້ນ 53%. ເຫັນໄດ້ວ່າ ສປປ ລາວ ໄດ້ດູນການຄ້າກັບ ສປ ຈີນ ເປັນປີທີສອງຕິດຕໍ່ກັນ, ເນື່ອງຈາກຜົນຜະລິດກະສິກຳເປັນຕົ້ນ ສາລີ, ໝາກເດືອຍ, ໝາກງາ, ເຄື່ອງປ່າຂອງດົງ, ຜະລິດຕະພັນ ແລະ ໄມ້ສຳເລັດຮູບ ແລະ ແຮ່ທາດຂອງ ສປປ ລາວ ແມ່ນສົ່ງອອກຫຼາຍໃນໄລຍະດັ່ງກ່າວ. (ຂໍ້ມູນຈາກກົມອາຊີ, ກະຊວງການຄ້າ ສປ ຈີນ, ລົງວັນທີ 01 ທັນວາ 2010).

ນອກຈາກນັ້ນ, ໃນດ້ານການລົງທຶນຂອງ ແຕ່ປີ 2000 ຫາ 2009 ມີນັກທຸລະກິດຈີນມາລົງທຶນຢູ່ ສປປ ລາວ ທັງໝົດຈຳນວນ 340 ໂຄງການ ຄິດເປັນມູນຄ່າ 2,6 ຕື້ ໂດລາສະຫະລັດ ຈັດຢູ່ໃນອັນດັບ 2 ຂອງນັກລົງທຶນ ທີ່ມາລົງທຶນທັງໝົດຢູ່ ສປປ ລາວ. ພຽງແຕ່ໃນປີ 2010 ນັກທຸລະກິດຈີນມາລົງທຶນຢູ່ ສປປ ລາວ ໄດ້ເພີ່ມຂຶ້ນ ຢ່າງຫຼວງຫຼາຍ ຊຶ່ງມີທັງໝົດ 16 ໂຄງການໃຫຍ່ ຄິດເປັນມູນຄ່າ 344,028,084 ໂດລາສະຫະລັດ ຊຶ່ງຈັດຢູ່ໃນ ອັນດັບ 1 ຂອງປີດັ່ງກ່າວ. (ຂໍ້ມູນຈາກກົມສົ່ງເສີມການລົງທຶນ, ກະຊວງແຜນການ ແລະ ການລົງທຶນ)

ເຖິງວ່າມູນຄ່າການຄ້າສອງຝ່າຍມີການເພີ່ມຂຶ້ນຢ່າງຕໍ່ເນື່ອງ ແຕ່ການສົ່ງອອກຂອງ ສປປ ລາວ ສ່ວນໃຫຍ່ແມ່ນເປັນ ການສົ່ງອອກແບບການຄ້າຊາຍແດນ. ຍ້ອນແນວນັ້ນ, ການສົ່ງອອກສິນຄ້າໄປ ສປ ຈີນ ຍັງພົບຄວາມຫຍຸ້ງຍາກ. ພ້ອມກັນນັ້ນ, ການຈັດຕັ້ງປະຕິບັດສັນຍາການຄ້າຕ່າງໆທີ່ລັດຖະບານໄດ້ເຊັນກັນ ເປັນຕົ້ນແມ່ນບັນດາແຜນຫຼຸດ ຜ່ອນອັດຕາພາສີໃນຂອບອາຊຽນ-ຈີນ, ສັນຍາການຄ້າອາຊີປາຊີຟິກ-APTA ແລະ ການຮ່ວມມືໃນຂອບຂອງບັນ ດາປະເທດໃນອະນຸພາກພື້ນລຸ່ມແມ່ນ້ຳຂອງ-GMS ຍັງບໍ່ມີການຈັດຕັ້ງປະຕິບັດຢ່າງກວ້າງຂວາງ. ນອກຈາກນັ້ນ, ການໃຫ້ ແລະ ນຳໃຊ້ສິດທິພິເສດທາງດ້ານການຄ້າຈາກ ສປ ຈີນ ກໍ່ຍັງບໍ່ໃຫ້ຜົນປະໂຫຍດສູງສຸດແກ່ຂະແໜງທຸລະ ກິດຂອງ ສປປ ລາວ ເທົ່າທີ່ຄວນ.

ເວົ້າລວມ ການພົວພັນການຄ້າສອງຝ່າຍ ລະຫວ່າງ ສປປ ລາວ ແລະ ສປ ຈີນ ແມ່ນມີການຂະຫຍາຍຕົວຢ່າງ ເພິ່ງພໍໃຈ. ໃນອະນາຄົດຫວັງວ່າສອງຝ່າຍຈະພະຍາຍາມຮ່ວມກັນພັດທະນາ ແລະ ສົ່ງເສີມໃຫ້ການຄ້າການລົງທຶນ ຂະຫຍາຍຕົວຍິ່ງຂຶ້ນ. ຍ້ອນວ່າ ສປ ຈີນ ເປັນຕະຫຼາດໃຫຍ່ ແລະ ມີບົດບາດສຳຄັນຕໍ່ເສດຖະກິດໃນພາກພື້ນ ກໍ່ຄືຕະຫຼາດຂອງໂລກ ຊຶ່ງມີເນື້ອທີ່ທັງໝົດ 9,5 ລ້ານກິໂລຕາແມັດ, ມີພົນລະເມືອງທັງໝົດປະມານ 1,3 ຕື້ຄົນ ຊຶ່ງເປັນປະເທດເສດຖະກິດອັນດັບ 3 ຂອງໂລກ ຖັດຈາກອາເມລິກາ ແລະ EU ຊຶ່ງ ໃນປີ 2010 ການສົ່ງອອກ ມີມູນຄ່າ1.423,84 ຕື້ໂດລາສະຫະລັດ, ມູນຄ່າການນຳເຂົ້າມີ ຈຳນວນ1.253,43 ຕື້ໂດລາສະຫະລັດ. ສິນຄ້າທີ່ ສປ ຈີນ ນຳເຂົ້າຕົ້ນຕໍແມ່ນ ສິນຄ້າກະສິກຳ, ນົມຜົງ, ນ້ຳມັນຈາກພືດ, ແຮ່ທາດ, ວັດຖຸດິບສຳລັບນຳໃຊ້ເຂົ້າໃນອຸດ

ສາຫະກຳປຸງແຕ່ງເປັນຕົ້ນ. (ຂໍ້ມູນຈາກກົມການຄ້າຕ່າງປະເທດ, ກະຊວງການຄ້າຈີນ) ທັດສະນະຂອງວິຊາການກົມນະໂຍບາຍການຄ້າຕ່າງປະເທດ ໃນນາມເປັນໜ່ວຍງານໃນການເຈລະຈາ ແລະ ມີສ່ວນຮ່ວມໃນການຊຸກຍູ້ການຈັດຕັ້ງປະຕິບັດບັນດາຂອບການຮ່ວມມືທາງດ້ານເສດຖະກິດ ແລະ ການຄ້າ ເຫັນວ່າໃນອະນາຄົດ ສປ ຈີນ ແມ່ນຕະຫຼາດຕົ້ນຕໍ ແລະ ສຳຄັນຂອງ ສປປ ລາວ ເປັນຕົ້ນແມ່ນສິນຄ້າກະສິກຳ ແລະ ອາຫານ ຍ້ອນວ່າ ສປ ຈີນ ເປັນຕະຫຼາດທີ່ມີການຜະລິດອຸດສາຫະກຳຂະໜາດໃຫຍ່ຂອງໂລກ ຊຶ່ງມີຄວາມຮຽກຮ້ອງຕ້ອງການວັດຖຸດິບ ໂດຍສະເພາະຜະລິດຕະພັນຈາກ ຢາງພາລາເປັນຈຳນວນຫຼວງຫຼາຍ. ປະຈຸບັນຢາງພາລາ ແມ່ນມີການປູກເປັນຈຳນວນຫຼາຍຢູ່ທົ່ວ ສປປ ລາວ. ຄຽງຄູ່ກັນນັ້ນ, ສປ ຈີນ ແມ່ນມີພົນລະເມືອງຫຼວງຫຼາຍ. ສະນັ້ນ, ຜະລິດຕະພັນກະສິກຳ ແລະ ສະບຽງອາຫານ ກໍ່ເປັນປັດໃຈໜຶ່ງທີ່ມີຄວາມຕ້ອງການສູງ ບວກກັບໂຄງການການສ້າງທາງລົດໄຟເຊື່ອມຕໍ່ລະຫວ່າງຈີນ-ລາວ-ໄທ ທີ່ຈະເກີດຂຶ້ນໃນມໍ່ໆນີ້. ສະນັ້ນ, ຖ້າ ສປປ ລາວ ມີການວາງແຜນໃສ່ການຜະລິດເປັນສິນຄ້າສົ່ງໄປຕະຫຼາດຈີນຢ່າງເປັນລະບົບ ພ້ອມທັງເພີ່ມການຮ່ວມມືລະຫວ່າງພາກລັດ ແລະ ເອກະຊົນຂອງທັງສອງຝ່າຍໃຫ້ດີຂຶ້ນກວ່າເກົ່າ ເຫັນວ່າຈະເປັນໂອກາດທີ່ດີ ສຳລັບ ສປປ ລາວ ໃນການເພີ່ມສ່ວນແບ່ງຕະຫຼາດ ສປ ຈີນ ໃນອະນາຄົດ.



*ການພົບປະສອງຝ່າຍລະຫວ່າງພະນະທ່ານຈູມມະລີ ໄຊຍະສອນ, ເລຂາທິການໃຫຍ່ພັກປະຊາຊົນປະຕິວັດລາວ, ປະທານປະເທດແຫ່ງ ສປປ ລາວ ແລະ ທ່ານ ສີຈິ້ນຜິງ, ກຳມະການປະຈຳກົມການເມືອງສູນກາງພັກກອມມູຍນິດຈີນ, ຮອງປະທານປະເທດແຫ່ງ ສປ ຈີນ, 16 ມິຖຸນາ 2010, ນະຄອນຫລວງວຽງຈັນ*

# ການປະເມີນ

## ມູນຄ່າແຈ້ງເສຍພາສີ

*ໂດຍ: ພະແນກນະໂຍບາຍການຄ້າຫລາຍຝ່າຍ, ກົມນະໂຍບາຍການຄ້າຕ່າງປະເທດ*

ຜູ້ນຳເຂົ້າໃນປັດຈຸບັນແມ່ນປະສົບກັບບັນຫາກ່ຽວກັບການປະເມີນມູນຄ່າສິນຄ້າພາສີຂາເຂົ້າ ແລະ ຈ່າຍອັດຕາພາ ສີທີ່ບໍ່ສອດຄ່ອງກັບຕົ້ນທຶນສິນຄ້າຂອງຕົນ. ສັນຍາ ອົງການການຄ້າໂລກ ວ່າດ້ວຍການກຳນົດມູນຄ່າແຈ້ງເສຍພາສີແມ່ນມີວັດຖຸປະສົງເພື່ອສ້າງຄວາມເປັນທຳ ແລະ ລະບົບທີ່ເປັນກາງໃນການກຳນົດມູນຄ່າສິນຄ້າເພື່ອແຈ້ງພາສີ ໂດຍປະຕິບັດຕາມຄວາມເປັນຈິງທາງດ້ານການຄ້າ ແລະ ເພື່ອເປັນການຫຼີກລ່ຽງ ການກຳນົດ ມູນຄ່າພາສີ ຕາມອຳເພີໃຈ ຫຼື ການແຈ້ງມູນຄ່າພາສີທີ່ບໍ່ກົງຕາມຄວາມຈິງ. ສັນຍາສະບັບນີ້ໄດ້ກຳນົດລະບຽບການໃນການ ກຳນົດມູນຄ້າແຈ້ງເສຍພາສີໃຫ້ກ້ວາງຂວາງ, ຈະແຈ້ງ ແລະ ຊັດເຈນອີງຕາມບົດບັນຍັດຂອງສັນຍາທົ່ວໄປວ່າດ້ວຍ ສິນຄ້າ ແລະ ພາສີ (GATT).

ສັນຍາວ່າດ້ວຍການປະເມີນມູນຄ່າແຈ້ງເສຍພາສີຂອງ WTO ຊຶ່ງເປັນສັນຍາໃນການປະຕິບັດມາດຕາ VII ຂອງສັນຍາ ທົ່ວໄປ ວ່າດ້ວຍພາສີ ແລະ ການຄ້າ (GATT) ມີວັດຖຸປະສົງຫຼັກເພື່ອສ້າງຄວາມຍຸດຕິທຳ, ຄວາມໂປ່ງໃສ ແລະ ຄວາມແນ່ນອນ ໃນການ ປະເມີນມູນຄ່າການແຈ້ງເສຍພາສີແນໃສ່ເພື່ອ ອຳນວຍ ຄວາມສະດວກໃຫ້ກັບພາກທຸລະກິດໃນການນຳເຂົ້າສິນຄ້າພ້ອມນັ້ນກໍເພື່ອເປັນການຫຼີກລ່ຽງການກຳນົດມູນຄ່າການເສຍພາສີຕາມອຳເພີໃຈໂດຍເຈົ້າໜ້າທີ່ພາສີ.

### ການປະເມີນມູນຄ່າແຈ້ງເສຍພາສີແມ່ນຫຍັງ?

ການປະເມີນມູນຄ່າແຈ້ງເສຍພາສີແມ່ນຂະບວນການໃນການກຳນົດມູນຄ່າສິນຄ້າເພື່ອຄິດໄລ່ພາສີນຳເຂົ້າຂອງສິນຄ້າຕ່າງໆບໍ່ວ່າຈະເກັບແບບທຽບຖານ, ແບບເດັດຖານ ຫຼື ແບບປະສົມກັນໂດຍສັນຍາການປະເມີນມູນຄ່າແຈ້ງເສຍພາສີຈະກຳນົດວິທີການຕ່າງໆ ທີ່ເຈົ້າໜ້າທີ່ພາສີຈະຕ້ອງໄດ້ ປະຕິບັດຕາມໂດຍຫຼັກການຕົ້ນຕໍແລ້ວໃນສັນຍາແມ່ນ ໃຫ້ນຳໃຊ້ມູນຄ່າການ ຊື້-ຂາຍຕົວຈິງ (transaction value) ເປັນຫຼັກ.

### ການເກັບພາສີມີຈັກປະເພດ?

- ການເກັບອັດຕາພາສີໃນຮູບແບບທຽບຖານໂດຍເກັບເປັນເປີເຊັນຂອງມູນຄ່າສິນຄ້ານຳເຂົ້າ.

- ການເກັບພາສີແບບເດັດຖານເຊິ່ງຈະເກັບເປັນມູນຄ່າຄົງທີ່ຕໍ່ກັບຫົວໜ່ວຍສິນຄ້າທີ່ນຳເຂົ້າ.

- ອັດຕາພາສີແບບປະສົມປະສານແມ່ນການລວມເອົາການເກັບພາສີແບບທຽບຖານກັບການເກັບພາສີແບບເດັດຖານ.

### ເນື້ອໃນຂອງສັນຍາວ່າດ້ວຍການກຳນົດພາສີຂາອອກມີຫຍັງແດ່?

ໃນສັນຍາການປະເມີນມູນຄ່າແຈ້ງເສຍພາສີແມ່ນກຳນົດວິທີການ ແລະ ຂັ້ນຕອນໃນການປະເມີນມູນຄ່າສິນຄ້ານຳເຂົ້າເພື່ອຮຽກ ເກັບພາສີ, ຊຶ່ງໂດຍຫຼັກການຕົ້ນຕໍແລ້ວແມ່ນໃຫ້ນຳໃຊ້ມູນຄ່າຊື້-ຂາຍຕົວຈິງເປັນຫຼັກ ບົນພື້ນຖານຫຼັກການບໍ່ຈຳແນກ ປະຕິບັດ ລະຫ່ວາງ ຕົ້ນກຳເນີດຂອງສິນຄ້າຫຼືປະເທດຜູ້ສົ່ງອອກ (Most-favoured nation), ບໍລິສັດ/ບຸກຄົນ ພາຍໃນ ແລະ ຕ່າງປະເທດ (National treatment). ສັນຍາດັ່ງກ່າວໄດ້ກຳນົດ 07 ວິທີການໃນການປະເມີນມູນຄ່າອັດຕາພາສີຊຶ່ງເຈົ້າໜ້າ ທີ່ພາສີຈະຕ້ອງໄດ້ປະຕິບັດຕາມແຕ່ລະວິທີ ແລະ ຂັ້ນຕອນຕາມລຳດັບດັ່ງນີ້:

1. **ມູນຄ່າຊື້-ຂາຍສິນຄ້າ, ເຄື່ອງຂອງນຳເຂົ້າ** (Transaction value): ແມ່ນລາຄາລວມທີ່ຜູ້ຊື້ຈ່າຍໃຫ້ຜູ້ຂາຍຕໍ່ກັບສິນຄ້າທີ່ນຳເຂົ້າລວມທັງທຸກໆ ຄ່າໃຊ້ຈ່າຍທີ່ກ່ຽວພັນກັບການນຳເຂົ້າສິນ ຄ້າລະຫ່ວາງຜູ້ຊື້ກັບຜູ້ຂາຍ ຫຼື ໂດຍຜູ້ຊື້ຕໍ່ກັບບຸກຄົນທີສາມ.

**2. ມູນຄ່າຊື້-ຂາຍສິນຄ້າ, ເຄື່ອງຂອງນຳເຂົ້າ ທີ່ຄືກັນ (**Transaction value of Identical goods): ການຄິດໄລ່ມູນຄ່າຊື້-ຂາຍຂອງສິນຄ້າທີ່ມີຮູບແບບທີ່ຄືກັນທຸກປະການຄື: ສິນຄ້າທີ່ມີລັກສະນະຄືກັນໃນດ້ານຮູບຊົງ, ລັກສະນະ, ຄຸນນະພາບ ແລະ ຊື່ສຽງຂອງສິນຄ້າ. ເຊິ່ງການປະເມີນມູນຄ່າສິນຄ້າແມ່ນຈະ ປະເມີນຈາກສິນຄ້າທີ່ຜະລິດຈາກປະເທດດຽວກັນ ແລະ ປະເມີນຕົ້ນທຶນການຜະລິດທີ່ຜະລິດຈາກຜູ້ຜະລິດປະເພດດຽວກັນ, ຂັ້ນຕອນເຫຼົ່ານີ້ແມ່ນຈະຖືກນຳໃຊ້ຕໍ່ກັບສິນຄ້າທີ່ມີລັກສະນະທີ່ຄືກັນທຸກປະການ.

**3. ມູນຄ່າຊື້-ຂາຍ ສິນຄ້າ, ເຄື່ອງຂອງນຳເຂົ້າທີ່ຄ້າຍກັນ (**Transaction value of Similar goods): ແມ່ນການກຳນົດ

ອັດຕາພາສີຂອງສິນຄ້າທີ່ມີລັກສະນະທີ່ຄ້າຍຄືກັນໂດຍອີງໃສ່ປັດໄຈຄຸນນະພາບຂອງສິນຄ້າ, ຊື່ສຽງ ແລະ ເຄື່ອງໝາຍການຄ້າທີ່ມີຢູ່.

**4. ການສະຫຼັບລະຫວ່າງ ວິທີ 5 ກັບ 6**:

ເມື່ອສິນຄ້ານຳເຂົ້າບໍ່ສາມາດກຳນົດພາຍໃຕ້ວິທີ 01,02 ແລະ 03 ໄດ້ ໜ່ວຍງານພາສີອາດນຳໃຊ້ ວິທີ 05 ຫຼື 06. ແຕ່ຜູ້ນຳເຂົ້າສິນຄ້າມີສິດຮຽກຮ້ອງໃຫ້ເລືອກໃຊ້ລະຫວ່າງວິທີ 06 ຫຼື 05.

**5. ວິທີຫັກລົບຄ່າໃຊ້ຈ່າຍບາງຢ່າງ (**Deductive method): ວິທີນີ້ແມ່ນຈະໄດ້ນຳໃຊ້ເມື່ອບໍ່ສາ ມາດປະຕິບັດຕາມວິທີການ ທີ 1-3 ເຊິ່ງຈະກຳນົດລາຄາຕໍ່ຫົວໜ່ວຍຂອງປະເພດສິນຄ້ານຳເຂົ້າ ທີ່ຄ້າຍ-ຄືກັນໂດຍອີງໃສ່ປະລິມານສິນຄ້າປະເພດໃດໜຶ່ງທີ່ນຳເຂົ້າໃນປະລິມານຫຼາຍເປັນຫຼັກ.

**6. ວິທີການໃຊ້ລາຄາຄຳນວນ (**Computed value): ການຄຳນວນການຜະລິດສິນຄ້າ ແມ່ນຂັ້ນຕອນທີ່ຂ້ອນຂ້າງຈະຫຍຸ້ງຍາກໃນການປະເມີນມູນຄ່າການແຈ້ງເສຍພາສີເຊິ່ງຈະອີງໃສ່ຕົ້ນທຶນການຜະລິດສິນຄ້າບວກກັບກຳໄລ ແລະ ຄ່າໃຊ້ຈ່າຍໂດຍລວມ ເຊິ່ງອີງໃສ່ລາຄາຂາຍຈາກປະເທດ ຜູ້ສົ່ງອອກຕໍ່ກັບປະເທດຜູ້ ນຳເຂົ້າໂດຍລວມເອົາມູນຄ່າອົງປະກອບທັງໝົດ ຂອງ ສິນຄ້າ.

**7. ວິທີການທີ່ສົມເຫດຜົນ 1-6 (**Fall-back Method): ຂັ້ນຕອນນີ້ແມ່ນຂັ້ນ ຕອນທີ່ຈະເລືອກເອົາວິທີໃດໜຶ່ງທີ່ກ່າວມາຂ້າງເທິງນັ້ນໃນການປະເມີນມູນຄ່າແຈ້ງເສຍພາສີໃຫ້ສົມເຫດສົມຜົນຕາມຂໍ້ກຳນົດຂອງ GATT.

ເຖິງຢ່າງໃດກໍຕາມ, ເມື່ອມູນຄ່າການຊື້-ຂາຍຫາກມີຂໍ້ສົງໄສ, ບໍ່ເປັນທີ່ຍອມຮັບໄດ້ ແລະ/ຫຼື ບໍ່ສາມາດກຳນົດໄດ້, ເນື່ອງຈາກວ່າລາຄາໄດ້ມີການບິດເບືອນຈາກຄວາມເປັນຈິງ,ເຈົ້າໜ້າທີ່ພາສີມີສິດໃນການກຳນົດການແຈ້ງມູນຄ່າການເສຍພາສີທີ່ນອນໃນ 1-6 ວິທີ ພາຍໃຕ້ຂອບສັນຍານີ້.ພ້ອມນັ້ນໃນກໍລະນີຂໍ້ມູນການຊື້ຂາຍບໍ່ຈະແຈ້ງ ເຈົ້າໜ້າທີ່ພາສີມີສິດຮຽກຮ້ອງເອົາຂໍ້ມູນການຊື້ຂາຍເພີ່ມຕື່ມຈາກຜູ້ນຳເຂົ້າສິນຄ້າ, ແຕ່ຂໍ້ມູນທີ່ເຈົ້າໜ້າທີ່ພາສີຮຽກຮ້ອງເພີ່ມຕື່ມນັ້ນຈະຕ້ອງເປັນຂໍ້ມູນທີ່ສົມເຫດສົມຜົນ ແລະ ມີກຳນົດເວລາອັນແນ່ນອນໃນການກວດສອບຂໍ້ມູນດັ່ງກ່າວເພື່ອຫຼີກລ່ຽງການສ້າງອຸປະສັກທີ່ບໍ່ຈຳເປັນຕໍ່ການຄ້າ.

### ຜົນປະໂຫຍດຂອງການປະຕິບັດສັນຍາມູນຄ່າແຈ້ງເສຍພາສີ WTO ມີຫຍັງແດ່:

ສ້າງຄວາມແນ່ນອນໃຫ້ກັບພາກທຸລະກິດນຳເຂົ້າ; ຊຶ່ງຈະນຳໄປສູ່ການຂະຫຍາຍຕົວດ້ານການຄ້າ, ຜູ້ນຳເຂົ້າສາມາດນຳເຂົ້າສິນຄ້າໃນມູນຄ່າ ແລະ ເສຍພາສີຕາມລາຄາຊື້ຂາຍຕົວຈິງຊຶ່ງການນຳເຂົ້າສິນຄ້າຈາກແຫຼ່ງຜະລິດທີ່ມີລາຄາຖືກກໍ່ຈະເສຍພາສີໄດ້ຖືກກ່ວາ, ຜະລິດຕະພັນພາຍໃນເພີ່ມຂຶ້ນ, ຜູ້ບໍລິໂພກມີທາງເລືອກຊື້ສິນຄ້າທີ່ຫຼາກຫຼາຍ, ການຈັດຕັ້ງປະຕິບັດສັນຍາ CV ຈະເຮັດໃຫ້ຂະບວນການກຳນົດການແຈ້ງເສຍພາສີໂດຍເຈົ້າໜ້າທີ່ພາສີມີຄວາມໂປ່ງໃສ, ຈະແຈ້ງ ແລະ ສ້າງຄວາມແນ່ນອນໃຫ້ກັບທຸລະກິດນຳເຂົ້າ, ລາຍໄດ້ຂອງລັດຖະບານເພີ່ມຂຶ້ນ ເນື່ອງຈາກຖານພາສີທີ່ເພີ່ມຂຶ້ນ (ແຫຼ່ງລາຍຮັບດ້ານພາສີ).

### ຄວາມຄືບໜ້າຂອງ ສປປລາວ ຕໍ່ກັບການແຈ້ງເສຍພາສີມີຄືແນວໃດ?

ປະຈຸບັນ ສປປລາວ ຍັງນຳໃຊ້ລາຄາອ້າງອີງເປັນສ່ວນໃຫຍ່ໃນການແຈ້ງມູນຄ່າການເສຍພາສີ ເຊິ່ງເຫັນວ່າການເສຍພາສີຂອງສິນຄ້າບາງປະເພດ ແມ່ນສູງກ່ວາຄວາມເປັນຈິງເຊິ່ງເປັນຂໍ້ເສຍປຽບໃຫ້ກັບຜູ້ນຳເຂົ້າສິນຄ້າຈະຕ້ອງໄດ້ປະເຊີນກັບການແຂ່ງຂັນທີ່ບໍ່ເປັນທຳຈາກການກຳນົດອັດຕາພາສີທີ່ນຳໃຊ້ລາຄາອ້າງອີງ.
ການແຈ້ງເສຍພາສີໃນຂອບ WTO ແມ່ນມີວັດຖຸປະສົງເພື່ອຈະລົບລ້າງການແຈ້ງເສຍພາສີທີ່ນຳໃຊ້ລາຄາອ້າງອີງເພື່ອເຮັດໃຫ້ຜູ້ນຳເຂົ້າໄດ້ຮັບການແຈ້ງເສຍພາສີທີ່ສົມເຫດສົມຜົນ. ປະຈຸບັນກະຊວງການເງິນ (ກົມພາສີ) ກຳລັງປັບປຸງລະບົບ, ກະກຽມເຄື່ອງມື ແລະ ບຸກຄະລາກອນເພື່ອໃຫ້ສາມາດຈັດຕັ້ງປະຕິບັດຕາມພັນທະສັນຍາການປະເມີນມູນຄ່າແຈ້ງເສຍພາສີ ກໍ່ຄືການຍົກເລີກການນຳໃຊ້ລາຄາອ້າງອີງ ໃນການແຈ້ງເສຍພາສີແຕ່ລະໝວດລາຍການສິນຄ້າເທື່ອລະກ້າວ ແລະ ໃຫ້ສາມາດຈັດຕັ້ງປະຕິບັດສັນຍາການແຈ້ງມູນຄ່າການເສຍພາສີຂອງ WTO ຢ່າງສົມບູນເຕັມທີ່ໃນປີ 2012.

# ໂຄງການ

## ສ້າງສູນບໍລິການຕັດຫຍິບ ແລະ ໂຄງການສົ່ງເສີມການຜະລິດເສັ້ນໄໝແບບຍືນຍົງ

*ໂດຍ: ກົມສົ່ງເສີມ ແລະ ພັດທະນາສິນຄ້າ*





ກົມສົ່ງເສີມ ແລະ ພັດທະນາສິນຄ້າ (ສພຄ), ກະຊວງອຸດສາຫະກຳ ແລະ ການຄ້າ ແມ່ນໜຶ່ງໃນຜູ້ຈັດຕັ້ງປະຕິບັດໂຄງການພາຍໃຕ້ທຶນຊ່ວຍເຫຼືອລ້າຫຼາຍຝ່າຍເພື່ອອຳນວຍຄວາມສະດວກດ້ານການຄ້າ ຫຼື TDF-Component C ເພື່ອສ້າງສະພາບແວດລ້ອມ ແລະ ເພີ້ມຄວາມສາມາດໃນການແຂ່ງຂັນເພື່ອສົ່ງອອກ. ປະຈຸບັນກົມ ສພຄ ພາຍໃຕ້ໂຄງການ TDF-Component C ຢູ່ໃນຂັ້ນຕອນລິເລີ່ມການຈັດຕັ້ງປະຕິບັດ 5 ໂຄງການ ຍ່ອຍ, ແຕ່ສຳລັບວາລະສານການຄ້າລາວສະບັບນີ້, ກົມ ສພຄ ຂໍສະເໜີລາຍລະອຽດຂອງ 2 ໂຄງການທີ່ທາງກົມກຳລັງຊຸ້ນຊ້ຽວໃນການເຮັດໃຫ້ໂຄງການເປັນຮູບປະທຳ

### ໂຄງການຍ່ອຍທີ 1: ໂຄງການສ້າງສູນບໍລິການຕັດຫຍິບລາວ (GARMENT SERVICE CENTRE_GSC)

ສູນບໍລິການຕັດຫຍິບ (GSC) ສ້າງຕັ້ງຂື້ນໂດຍນຳໃຊ້ທຶນຂອງໂຄງການ TDF-Component C ເຊິ່ງເປັນຫົວໜ່ວຍດຳເນີນທຸລະກິດຂອງສະມາຄົມອຸດສາຫະກຳຕັດຫຍິບລາວ (ALGI) ເພື່ອໃຫ້ບໍລິການດ້ານການຝຶກອົບຮົມ ແລະໃຫ້ຄຳປຶກສາສະເພາະດ້ານອຸດສາຫະກຳຕັດຫຍິບ.

ເປົ້າໝາຍຂອງໂຄງການ (GSC) ແມ່ນເພື່ອ "ເພີ່ມທະວີຄວາມອາດສາມາດໃນການແຂ່ງຂັນຂອງຂະແໜງການອຸດສາຫະກຳຕັດຫຍິບ". ສະພາບປະຈຸບັນຂອງອຸດສາຫະກຳຕັດຫຍິບຂອງໂລກມີຄວາມປ່ຽນແປງຢ່າງໃຫ່ຍຫລວງ ແລະແມ່ນການເຄື່ອນຍ້າຍໄປສູ່ຍຸກທີ່ຈະຕ້ອງໄດ້ສະໜອງສິນຄ້າທີ່ມີຄຸນນະພາບໃນເວລາອັນສັ້ນ ແລະໃນລາຄາແຂ່ງຂັນໄດ້ ແລະ ນັ້ນກໍຖືວ່າເປັນພຽງຄວາມຕ້ອງການອັນພື້ນຖານເທົ່ານັ້ນ ແຕ່ສິ່ງທີ່ໃດ້



ປຽບກວ່ານັ້ນ  ແມ່ນຄວາມສາມາດຂອງໂຮງງານໃນການໃຫ້ບໍລິການ. ເນື່ອງຈາກວ່າໃນຕົວຈິງການສົ່ງອອກຂອງຂະແໜງການຕັດຫຍິບແມ່ນມີຄວາມສ່ຽງໃນພາວະຢຸດຈິ້ງ ແລະຕົກຕໍ່າລົງ ເພາະການແຂ່ງຂັນນັບມື້ນັບດຸເດືອດ ແລະ ຂ້ຽວຂາດ ຊຶ່ງຖືວ່າເປັນໜຶ່ງໃນບັນດາສິ່ງທີ່ກີດຂວາງທີ່ຮ້າຍແຮງ ໂດຍສະເພາະແມ່ນຕໍ່ໂຮງງານທີ່ເຮັດການຜະລິດເພື່ອສົ່ງອອກລາຍໃຫຍ່, ສະນັ້ນ ໂຄງການຈຶ່ງມີຈຸດປະສົງຫຼັກເພື່ອສ້າງຄວາມສາມາດດ້ານຊັບພະຍາກອນມະນຸດໃຫ້ແກ່ບັນດາໂຮງງານ ເພື່ອໃນການຍົກລະດັບການຄວບຄຸມງານເພື່ອເພີ່ມຜະລິດຕະພາບ ແລະປະສິດທິຜົນຂອງໂຮງງານ, ເຊິ່ງສິ່ງນີ້ສາມາດເຮັດໄດ້ດ້ວຍການຝຶກອົບຮົມທີ່ມີຄຸນນະພາບສູງແລະດັດປັບເຂົ້າກັບສະພາບຕົວຈິງຂອງປະເທດລາວເຮົາ.

ລັກສະນະພິເສດຂອງການສອນ ແລະການຮຽນຂອງສູນບໍລິການຕັດຫຍິບແມ່ນການນໍາໃຊ້ຫຼັກສູດທີ່ມີແບບແຜນ, ວິທີການກໍານົດທິດທາງທີ່ຄວບຄຸມທຸກເນື້ອໃນ  ແລະ ມີຜົນນໍາໃຊ້ໄດ້ໃນການຈັດການວຽກງານໃນໂຮງງານອຸດສາຫະກໍາຕັດຫຍິບ. ໃນໄລຍະຍາວຫຼັກສູດການສອນຈະຈັດລຽງເລີ່ມຈາກການແນະນໍາລະດັບພື້ນຖານ ແລະຕໍ່ເນື່ອງເປັນຂັ້ນໆ ໃຫ້ສອດຄ່ອງກັບມາດຕະຖານສິນິແຮງງານຕາມການຢັ້ງຢືນຈາກອົງກອນ  AFTEX- - ASEAN Federation of Textile Industry (ໃນກາງ ຫຼື ທ້າຍປີ 2011 ຈະເປັນຄັ້ງທໍາອິດຂອງປະເທດອາຊີຕາເວັນອອກສ່ຽງໃຕ້ໃນການຈະສາມາດນໍາໃຊ້ແລະອອກໃບຢັ້ງຢືນຈາກ AFTEX ທີ່ຈະສາມາດນໍາໃຊ້ໄດ້ໃນ ກາງ ຫຼື ທ້າຍປີ 2011) ທັງເປັນຄວາມກ້າວໜ້າແລະໄດ້ປຽບໃນການພັດທະນາຫົວຂໍ້ການຈັດການໂຮງງານອຸດສາຫະກໍາຕັດຫຍິບທາງດ້ານທິດສະດີ ແລະພາກປະຕິບັດ.  ປະຈຸບັນນີ້ຫຼາຍໂຮງງານໄດ້ຮັບການສັ່ງຊື້ເຕັມອັດຕາ, ແຕ່ການຂາດເຂີນແຮງງານເປັນບັນຫາທ້າທາຍປະຈໍາວັນໃນການສົ່ງເຄື່ອງອອກຕາມເວລານັດໝາຍສົ່ງມອບຜະລິດຕະພັນໃຫ້



*ການຍ້ອມໄໝແບບທໍາມະຊາດ*



ລູກຄ້າ. ຜົນການສຳຫຼວດໄດ້ຊີ້ໃຫ້ເຫັນວ່າ 70% ຂອງຜູ້ບໍລິຫານໂຮງງານເຫັນຄວາມຈຳເປັນໃນການຝຶກອົບຮົມໃຫ້ຄວາມຮູ້, ຄວາມສາມາດໃຫ້ຜູ້ຄຸມງານ ແລະຝຶກທັກສະໃຫ້ພະນັກງານກຳມະກອນຫຍິບຜູ້ເຂົ້າໃໝ່. ຢູ່ໂຮງງານຕັດຫຍິບສ່ວນໃຫ່ຍຜູ້ຄຸມງານຈະຖືກເລືອກຈາກພະນັກງານກຳມະກອນຫຍິບຜູ້ດີເດັ່ນເຊິ່ງໃນເມືອກ່ອນກໍ່ອາດຈະເຄີຍເປັນຜູ້ບໍ່ທັນຊຳນານງານ. ໃນປະຈຸບັນມີພຽງບາງໂຮງງານທີ່ຝຶກອົບຮົມຄວາມສາມາດທີ່ຈຳເປັນໃຫ້ຜູ້ຄຸມງານໃນໂຮງງານດ້ວຍຕົວເອງ ເຊິ່ງສ່ວນໃຫ່ຍຄວາມສາມາດທາງດ້ານສີມືທີ່ສັງເກດເຫັນຄວາມກ້າວໜ້າໄດ້ແມ່ນມາຈາກພື້ນຖານຄວາມມີປະສົບການຕາມລະດັບຊັ້ນຄວາມແຕກຕ່າງໃນການຜະລິດ. ໜ້ອຍກວ່າ 20% ຂອງຫົວໜ້າແຖວ, ຜູ້ຊ່ວຍຫົວໜ້າແຖວ ແລະຜູ້ຄຸມງານໄດ້ຜ່ານການຝຶກອົບຮົມຄວາມສາມາດຕາມລະບົບທີ່ເໝາະສົມ.

ສູນບໍລິການຕັດຫຍິບ ມີແຜນເປີດທົດລອງຊຸດຝຶກອົບຮົມທຳອິດໃນທ້າຍເດືອນ ມີນາ 2011 ນີ້, ເຊິ່ງຈະເນັ້ນໜັກການຝຶກອົບຮົມສຳລັບສອງກຸ່ມຫລັກຄື:

1. ຝຶກອົບຮົມຜູ້ຄວບຄຸມງານ, ຫົວໜ້າແຖວຫຍິບ, ແລະຜູ້ຊ່ວຍຫົວໜ້າແຖວ ໃນການເພີ່ມອັດຕາການຜະລິດ, ການສຶກສາເວລາແລະວຽກ, ຄວາມສົມດຸນຂອງແຖວຫຍິບ ແລະການຈັດການວຽກງານຄວບຄຸມ.

2. ຝຶກອົບຮົມຜູ້ສົນໃຈທີ່ຈະເຮັດວຽກໃນຂົງເຂດອຸດສາຫະກຳຕັດຫຍິບ ດ້ວຍສາຍການຜະລິດຕົວຈິງທີ່ມີຫຼາກຫຼາຍປະເພດຈັກຫຍິບເພື່ອບັນຈຸໃນຕຳແໜ່ງພະນັກງານຫຍິບ.

ເຊິ່ງການຝຶກອົບຮົມສອງກຸ່ມນີ້ຈະຈັດຄຽງຄູ່ກັນ, ຜູ້ເຂົ້າຮ່ວມການຝຶກອົບຮົມຈະມີໂອກາດສຶກສາ ແລະຮຽນຮູ້ທັກສະ ພາຍໃຕ້ການແນະນຳຢ່າງໃກ້ຊິດຈາກຄູຝຶກ. ການຝຶກອົບຮົມໃນລັກສະນະນີ້ຈະເຮັດໃຫ້ຜູ້ຮັບການຝຶກ ໄດ້ຮຽນຮູ້ທັງພາກທິດສະດີ ແລະການປະຕິບັດຕົວຈິງໄປພ້ອມໆກັນແລະ ເຮັດໃຫ້ໂຮງງານສາມາດບັນຈຸຜູ້ສຳເລັດການສຶກສາເຂົ້າຕຳແໜ່ງງານໄດ້ເລີຍ. ໃນອະນາຄົດສູນບໍລິການຕັດຫຍິບ ຈະເປີດຮັບນັກຮຽນຈົບອຸດົມສາຍສາມັນເພື່ອຝຶກອາຊີບໃນຂົງເຂດອຸດສາຫະກຳຕັດຫຍິບ ເຊິ່ງເປັນອຸດສາຫະກຳໜຶ່ງທີ່ມີຫຼາຍໜ້າວຽກ ຈາກຈຸດເລີ່ມຕົ້ນແລ້ວພັດທະນາຄວາມສາມາດ ໄປເຖິງຕຳແໜ່ງຜູ້ບໍລິຫານໂຮງງານໃນອະນາຄົດ. ກຳນົດການຝຶກອົບຮົມແມ່ນຈະເລີ້ມໃນປີ 2011 ແລະ ທາງສູນໄດ້ກຽມພ້ອມໃຫ້ຜູ້ສົນໃຈມາລົງຖະບຽນໄດ້ທີ່ສູນບໍລິການຕັດຫຍິບ. ປະຈຸບັນຫ້ອງການຂອງພວກເຮົາຢູ່ຮ່ວມກັບສະມາຄົມອຸດສາຫະກຳຕັດຫຍິບລາວ ເຮືອນເລກທີ 137/1 ຖະໜົນ ສຸພານຸວົງ ເມືອງສີໂຄດຕະບອງ ນະຄອນຫຼວງວຽງຈັນ ໂທ: (021) 254 226, 214 450, 222 769,
Fax: (021) 216 993.

## ໂຄງການຍ່ອຍທີ 2: ໂຄງການສົ່ງເສີມການຜະລິດເສັ້ນໄໝ ແລະ ສິນຄ້າຫັດຖະກຳແບບຍືນຍົງ.

ເປົ້າໝາຍຂອງໂຄງການນີ້ ແມ່ນເພື່ອເສີມຂະຫຍາຍການຜະລິດເສັ້ນໄໝລາວໃຫ້ມີຄຸນນະພາບແລະມີການພັດທະນາ ຢ່າງຍືນຍົງ, ພຽງພໍກັບຄວາມຕ້ອງການໃນການຊົມໃຊ້ພາຍໃນລາວ ແລະ ຫຼຸດຜ່ອນການນຳເຂົ້າເສັ້ນໄໝຈາກຕ່າງປະເທດ. ເພື່ອໃຫ້ສາມາດບັນລຸໄດ້ເປົ້າໝາຍດັ່ງກ່າວ, ກົມ ສພຄ ຈຶ່ງໄດ້ຈັດຕັ້ງປະຕິບັດ 2 ກິດຈະກຳຕົ້ນຕໍຄື:

ກິດຈະກຳທີ 1: ໃນກາງປີ 2010 ທີ່ຜ່ານມານີ້, ກົມສົ່ງເສີມ ແລະ ພັດທະນາສິນຄ້າ ໄດ້ຈັດການປະກວດບົດສະເໜີໂຄງການສົ່ງເສີມການຜະລິດເສັ້ນໄໝແບບຍືນຍົງ ໂດຍແນໃສ່ 3 ພາກຂອງລາວຄື: ພາກກາງ, ພາກເໜືອ ແລະ ພາກໃຕ້. ໃນເດືອນພະຈິກທີ່ຜ່ານມານີ້, ກົມສົ່ງເສີມ ແລະ ພັດທະນາສິນຄ້າ ແລະ ຄະນະກຳມະການທີ່ຖືກແຕ່ງຕັ້ງໃນການຄັດເລືອກໂຄງການ ໄດ້ເດີນທາງໄປຢ້ຽມຢາມບ້ານປາກແຖບ ແລະ ບ້ານຫ້ວຍຄຳ ເມືອງສັງທອງ ນະຄອນຫລວງວຽງຈັນ ຊຶ່ງເປັນເຂດທີ່ຖືກສະເໜີຂໍຂະຫຍາຍການຜະລິດເສັ້ນໄໝຈາກ 1 ໃນ 4 ບໍລິສັດທີ່ສົ່ງບົດເຂົ້າຮ່ວມປະກວດ. ໃນຕົ້ນເດືອນທັນວາທີ່ຜ່ານມານີ້ ທາງກົມໄດ້ເດີນທາງໄປຢ້ຽມຢາມພື້ນທີ່ສະເໜີຂະຫຍາຍໂຄງການຂອງອີກ 2 ບໍລິສັດຢູ່ແຂວງຊຽງຂວາງ ແລະ ໃນທ້າຍເດືອນດຽວກັນກໍ່ໄດ້ໄປຢ້ຽມຢາມພື້ນທີ່ທີ່ຖືກສະເໜີຢູ່ແຂວງຈຳປາສັກ. ປະຈຸບັນ ຄະນະກຳມະການຢູ່ໃນຂະບວນການຍັງສຶກສາລະອຽດໃນການຄັດເລືອກ ເພື່ອໃຫ້ການສະໜັບສະໜູນບໍລິສັດທີ່ມີທ່າແຮງທີ່ສຸດມາດຖານແລະເງື່ອນໄຂຄົບຖ້ວນ.

ນອກຈາກສະໜັບສະໜູນດ້ານການຜະລິດເສັ້ນໄໝແລ້ວ, ກົມສົ່ງເສີມ ແລະ ພັດທະນາສິນຄ້າ ຍັງໄດ້ສະໜັບສະໜູນດ້ານການຕະຫຼາດອີກດ້ວຍ. ກົມ ສພຄ ຕາງໜ້າໃຫ້ແກ່ກະຊວງອຸດສາຫະກຳ ແລະ ການຄ້າ ໄດ້ສະໜອງດ້ານງົບປະມານໃຫ້ແກ່ສະມາຄົມຫັດຖະກຳລາວເພື່ອຈັດງານ “ມະຫາກຳສີມືຫັດຖະກຳລາວຄັ້ງທີ 9” ໃນລະຫວ່າງວັນທີ 1-5 ເດືອນພະຈິກ ປີ 2010 ທີ່ຜ່ານມາທີ່ສູນການຄ້າລາວໄອເຕັກ, ເຊິ່ງມີຜູ້ປະກອບການວາງສະແດງ ແລະ ຂາຍສິນຄ້າຫັດຖະກຳລາວເຂົ້າຮ່ວມລວມທັງໝົດ 200 ຮ້ານ . ນອກນີ້, ກົມ ສພຄ ຍັງໄດ້ສະໜອງງົບປະມານໃນການກະກຽມງານມະຫະກຳດັ່ງກ່າວ ໂດຍໄດ້ຈັດຝຶກອົບຮົມທັງໝົດ 6 ຄັ້ງກ່ຽວກັບການຜະລິດ ແລະ ການຕະຫຼາດຂອງສິນຄ້າຫັດຖະກຳ ໃນ 7 ແຂວງ ແຕ່ພາກກາງຫາພາກໃຕ້. ການສະໜັບສະໜູນໃຫ້ແກ່ສະມາຄົມຫັດຖະກຳລາວ ແລະ ການຈັດງານມະຫາກຳສີມືຫັດຖະກຳລາວຄັ້ງທີ 9 ນີ້ ແມ່ນມີຄວາມໝາຍສຳຄັນເນື່ອງຈາກເປັນການສະແດງໃຫ້ເຫັນເຖິງຄວາມເອົາໃຈໃສ່ຂອງກະຊວງອຸດສາຫະກຳ ແລະ ການຄ້າ ໃນການສົ່ງເສີມຜະລິດຕະພັນຫັດຖະກຳ ຊຶ່ງເປັນເອກະລັກທາງວັດທະນາທຳລາວແຕ່ນານມາ.

# ຄວາມໝາຍ

## ແລະ ຄວາມສຳຄັນ ຂອງການອຳນວຍຄວາມສະດວກ ທາງດ້ານການຄ້າ

*ໂດຍ: ກົມນຳເຂົ້າ ແລະ ສົ່ງອອກ*

### 1. ຄວາມໝາຍ

ການອຳນວຍຄວາມສະດວກທາງດ້ານການຄ້າ ໄດ້ຖືກຍົກຂຶ້ນມາເປັນປະເດັນທີ່ສຳຄັນ ໃນການປຶກສາຫາລື ຂອງຫລາຍອົງການຈັດຕັ້ງສາກົນນັບແຕ່ປີ 1998 ເປັນຕົ້ນມາ. ຄຳວ່າ: ການອຳນວຍຄວາມສະດວກທາງດ້ານການຄ້າ (Trade Facilitation) ຍັງບໍ່ມີການໃຫ້ນິຍາມທີ່ຊັດເຈນ ແລະ ມີການໃຫ້ທັດສະນະຕໍ່ກັບ



ນິຍາມຂອງການອຳນວຍຄວາມສະດວກທາງດ້ານການຄ້າ ທີ່ແຕກຕ່າງກັນໄປ. ໃນແນວຄວາມຄິດແຄບ (Narrower Sense) ການອຳນວຍຄວາມສະດວກທາງດ້ານການຄ້າອາດຈະໝາຍເຖິງການຈັດຮູບແບບລະບົບເອກະສານ ແລະ ຂັ້ນຕອນທາງດ້ານພາສີໃຫ້ກະທັດຮັດ, ງ່າຍດາຍ ແລະ ແທດເໝາະຂຶ້ນ. ແຕ່ໃນແນວຄວາມຄິດທີ່ກ້ວາງໄປກ່ວານັ້ນ (wider sense), ການອຳນວຍຄວາມສະດວກທາງດ້ານການຄ້າແມ່ນພົວພັນເຖິງທຸກລະບຽບການທີ່ມີຜົນກະທົບຕໍ່ການນຳເຂົ້າສິນຄ້າ (Import), ການສົ່ງອອກສິນຄ້າ (Export), ແລະ ການນຳສິນຄ້າຜ່ານແດນ ລວມທັງມາດຕະການຄວບຄຸມຂອງພາສີ (Customs Control Measures), ການກວດກາຄຸນນະພາບຂອງສິນຄ້າ (Other Quality control Inspection), ແລະ ການກັກກັນພືດ (Veterinary Inspection).

ລວມຄວາມແລ້ວສາມາດສະຫຼຸບໄດ້ວ່າ: ການອຳນວຍຄວາມສະດວກທາງດ້ານການຄ້າ ແມ່ນການເຮັດໃຫ້ການຈັດຕັ້ງປະຕິບັດລະບຽບການ ແລະ ຂັ້ນຕອນການຄ້າສາກົນ ແລະ ພາສີ ມີຄວາມກະທັດຮັດ, ງ່າຍດາຍ, ວ່ອງໄວ, ເປັນລະບົບດຽວກັນ ແລະ ທັນສະໄໝຂຶ້ນ.

## 2. ຜົນປະໂຫຍດຈາກການອຳນວຍຄວາມສະດວກທາງດ້ານການຄ້າ

ຫຼາຍບົດວິໄຈໄດ້ສະຫຼຸບວ່າ ການອຳນວຍຄວາມສະດວກທາງດ້ານການຄ້າຈະສາມາດປະກອບ ສ່ວນເຂົ້າໃນການພັດທະນາເສດຖະກິດ - ສັງຄົມ ແລະ ກ້າວໄປເຖິງການລົບລ້າງຄວາມທຸກຍາກຂອງຊາດອັນເນື່ອງມາຈາກຫຼາຍປັດໃຈດັ່ງນີ້:

(1)ສາມາດຫຼຸດຕົ້ນທຶນຂອງສິນຄ້າເນື່ອງຈາກວ່າ ຫຼຸດຂັ້ນຕອນການດຳເນີນເອກະສານ, ຂັ້ນຕອນການກວດກາ, ເວລາໃນການຊຳລະສະສາງ ແລະ ການແຈ້ງສິນຄ້າມີຄວາມສະດວກ ແລະ ວ່ອງໄວ.

(2)ສາມາດຊ່ວຍໃຫ້ລັດຖະບານເກັບງົບປະມານໄດ້ຢ່າງມີປະສິດທິຜົນ ແລະ ຫຼີກລ້ຽງການຄ້າແບບຜິດກົດໝາຍ (Illegal Transaction).

(3)ຊ່ວຍໃຫ້ການສົ່ງອອກມີຄວາມສາມາດແຂ່ງຂັນໃນຕະຫຼາດສົ່ງອອກ (Export competitiveness) ເນື່ອງຈາກຕົ້ນທຶນບໍ່ສູງ ອັນເປັນຜົນມາຈາກການດຳເນີນການສົ່ງອອກມີຄວາມວ່ອງໄວ ແລະ ບໍ່ມີຄ່າໃຊ້ຈ່າຍໃນການດຳເນີນເອກະສານຫຼາຍ.

(4)ເຮັດໃຫ້ຫົວໜ່ວຍທຸລະກິດຂະໜາດນ້ອຍ ແລະ ກາງ (Small and Medium Enterprises) ສາມາດເຂົ້າຕະຫຼາດຕ່າງປະເທດໄດ້ງ່າຍ.

(5)ເຮັດໃຫ້ມີການດຶງດູດການລົງທຶນຈາກຕ່າງປະເທດ ເນື່ອງຈາກມີການອຳນວຍຄວາມສະດວກທາງດ້ານການຄ້າ ແລະ ການເພີ່ມຂຶ້ນຂອງການລົງທຶນຕ່າງປະເທດກໍຈະມີຜົນເຮັດໃຫ້ເສດຖະກິດຂອງປະເທດດີຂຶ້ນ.

## 3. ອົງການຫຼັກທີ່ກ່ຽວຂ້ອງໃນວຽກງານການອຳນວຍຄວາມສະດວກທາງດ້ານການຄ້າ

ໂດຍທົ່ວໄປການດຳເນີນການຄ້າສາກົນແມ່ນຕິດພັນກັບຫຼາຍພາກສ່ວນທີ່ແຕກຕ່າງກັນ. ໃນນັ້ນລວມມີທັງພາກລັດ ແລະ ພາກເອກະຊົນ. ສະນັ້ນ, ວຽກງານການອຳນວຍຄວາມສະດວກທາງດ້ານການຄ້າ ຈຶ່ງຕິດພັນກັບຫຼາຍພາກສ່ວນ ເຊິ່ງພາກສ່ວນຫຼັກປະກອບດ້ວຍ:

*ຂົວມິດຕະພາບ ລາວ - ໄທ ແຫ່ງທີ່ສອງ ທີ່ແຂວງສະຫວັນນະເຂດ*



**3.1. ພາກລັດ:**

- ກະຊວງອຸດສາຫະກຳ ແລະ ການຄ້າ
- ກະຊວງການເງິນ (ກົມພາສີ)
- ກະຊວງໂຍທາທິການ ແລະ ຂົນສົ່ງ (ກົມຂົນສົ່ງ)
- ກະຊວງກະສິກຳ ແລະ ປ່າໄມ້ (ກົມລ້ຽງສັດ ແລະ ການປະມົງ, ກົມປູກຝັງ)
- ກະຊວງສາທາລະນະສຸກ (ກົມອາຫານ ແລະ ຢາ)

**3.2. ພາກເອກະຊົນ:**

- ຜູ້ຕາງໜ້າພາກເອກະຊົນ ແລະ ຜູ້ດຳເນີນທຸລະກິດດ້ານການຄ້າ ເຊັ່ນ: ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ, ສະມາຄົມທີ່ຕິດພັນກັບການນຳເຂົ້າ ແລະ ສົ່ງອອກ, ຕົວແທນຜູ້ຊື້, ຜູ້ຈຳໜ່າຍ ແລະ ຮ້ານຄ້າ;
- ຜູ້ໃຫ້ບໍລິການຂົນສົ່ງເຊັ່ນ: ບໍລິສັດຂົນສົ່ງ, ບໍລິສັດຈັດສົ່ງ, ຜູ້ບໍລິການແຈ້ງເອກະສານນຳເຂົ້າ ແລະ ສົ່ງອອກ;
- ຜູ້ດຳເນີນທຸລະກິດດ້ານບໍລິການທາງດ້ານປະກັນໄພ ແລະ ການເງິນ: ທະນາຄານ, ບໍລິສັດປະກັນໄພ.

## 4. ວຽກງານການອຳນວຍຄວາມສະດວກທາງດ້ານການຄ້າໃນຂອບ ໂຄງການ TRADE DEVELOPMENT FACILITY (TDF):

ກະຊວງອຸດສາຫະກຳ ແລະ ການຄ້າ, ກົມການນຳເຂົ້າ ແລະ ສົ່ງອອກ ເຊິ່ງເປັນກົມນຳພາຈັດຕັ້ງປະຕິບັດ ໂຄງການອຳນວຍຄວາມສະດວກທາງດ້ານການຄ້າ ໃນຂອບໂຄງການ TDF ເຊິ່ງປະກອບມີ 2 ໜ້າວຽກຫຼັກຄື: (1). ຈັດຕັ້ງປະຕິບັດສູນຂໍ້ມູນຂ່າວສານທາງດ້ານການຄ້າຂອງ ສປປ ລາວ ແລະ (2). ແຜນຍຸດທະສາດການອຳນວຍຄວາມສະດວກທາງດ້ານການຄ້າ ເຊິ່ງຈະເປັນການປະກອບສ່ວນເຂົ້າໃນວຽກງານການອຳນວຍຄວາມສະດວກທາງດ້ານການຄ້າ. ການຈັດຕັ້ງປະຕິບັດກິດຈະກຳໃນຂອບໂຄງການດັ່ງກ່າວໄດ້ດຳເນີນໄປດັ່ງລຸ່ມນີ້:

**1. ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກອງເລຂາອຳນວຍຄວາມສະດວກທາງດ້ານການຄ້າ** ເຊິ່ງຢູ່ພາຍໃນການຊີ້ນຳຂອງຄະນະກຳມະການວ່າດ້ວຍການເຊື່ອມໂຍງເສດຖະກິດກັບສາກົນ ໄດ້ຖືກຮັບຮອງການສ້າງຕັ້ງຂຶ້ນຢ່າງເປັນທາງການຕາມຂໍ້ຕົກລົງຂອງ ທ່ານ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີວ່າການກະຊວງການຕ່າງປະເທດ, ປະທານຄະນະກຳມະການວ່າດ້ວຍການເຊື່ອມໂຍງເສດ ຖະກິດກັບສາກົນ ໃນວັນທີ 20 ເດືອນຕຸລາ ປີ 2010. ຂໍ້ຕົກລົງດັ່ງກ່າວແມ່ນກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ ແລະ ລະບົບແບບແຜນວິທີເຮັດວຽກ ເພື່ອເປັນບ່ອນອີງດ້ານນິຕິກຳໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກອງເລຂາອຳນວຍຄວາມສະດວກທາງດ້ານການຄ້າ ເພື່ອສ້າງກົນໄກປະສານງານ ໃນວຽກງານການອຳນວຍຄວາມສະດວກທາງດ້ານການຄ້າ ແນໃສ່ຫຼຸດຜ່ອນຂັ້ນຕອນ ແລະ ສິ່ງກີດຂວາງທາງດ້ານການຄ້າ ເພື່ອຊຸກຍູ້ ແລະ ສົ່ງເສີມການຄ້າໃຫ້ມີການຂະຫຍາຍຕົວ.

**2. ພ້ອມດຽວກັນນັ້ນ ກົມການນຳເຂົ້າ ແລະ ສົ່ງອອກ, ກະຊວງອຸດສາຫະກຳ ແລະ ການຄ້າ**
ກຳລັງດຳເນີນການຮ່າງແຜນຍຸດທະສາດ ແລະ ແຜນຈັດຕັ້ງປະຕິບັດການອຳນວຍຄວາມສະດວກທາງ ດ້ານການຄ້າ (Trade Facilitation Strategy and Action Plan) ໂດຍປະສານສົມທົບກັບ ທຸກພາກສ່ວນທີ່ກ່ຽວຂ້ອງ ເພື່ອນຳໃຊ້ເປັນບ່ອນອີງໃນການເຄື່ອນໄຫວວຽກງານ ຂອງກອງເລຂາອຳນວຍຄວາມສະດວກທາງດ້ານການຄ້າ  ເຊິ່ງຄາດວ່າຮ່າງແຜນຍຸດທະສາດ ສະບັບດັ່ງກ່າວ ຈະສຳເລັດໃນ ຕົ້ນປີ 2011 ນີ້.

ສຳລັບບັນດາທ່ານ ທີ່ຕ້ອງການຂໍ້ມູນເພີ່ມເຕີມ, ສາມາດຕິດຕໍ່ທາງພະແນກອຳນວຍຄວາມສະດວກທາງດ້ານການຄ້າ ຂອງກົມນຳເຂົ້າ ແລະ ສົ່ງອອກ (ໂທ: 021 454224, 412436 - 224), ກະຊວງອຸດສາຫະກຳ ແລະ ການຄ້າ.



# ການພັດທະນາວຽກງານ ໜຶ່ງເມືອງ ໜຶ່ງຜະລິດຕະພັນ

# ODOP

*ໂດຍ: ສະຖາບັນຄົ້ນຄ້ວາເສດຖະກິດ ແລະ ການຄ້າ.*

ວຽກງານພັດທະນາ ໜຶ່ງເມືອງ ໜຶ່ງຜະລິດຕະພັນ ເປັນຂໍກຸນແຈອັນໜຶ່ງໃນການພັດທະນາຊຸມຊົນ ໃນຫລາຍປະເທດ, ຊຶ່ງແນວຄວາມຄິດດັ່ງກ່າວໄດ້ຖືກພັດທະນາມາຈາກແຂວງ ໂອອິຕາ, ປະເທດຍີ່ປຸ່ນ ແລະປະຈຸບັນວຽກງານ ODOP ກໍ່ໄດ້ຈັດຕັ້ງປະຕິບັດໃນຫລາຍປະເທດ ລວມທັງ ສປປ ລາວ. ການ ພັດທະນາວຽກງານ ODOP ໄດ້ຖືກຍອມຮັບວ່າ ສາມາດສ້າງລາຍຮັບ ແລະ ພ້ອມທັງສ້າງວຽກເຮັດ ງານທຳໃນຂົງເຂດຊົນນະບົດ ແລະ ຍັງສາມາດຫລຸດຜ່ອນການລັ່ງໄຫລແຮງງານເຂົ້າເມືອງໃຫຍ່, ຫລຸດຜ່ອນການສູນເສຍວິຖີການເປັນຢູ່ ແລະ ຮີດຄອງປະເພນີອີກຕື່ມ.  ສະນັ້ນ ແນວຄວາມຄິດຂອງ ODOP ໃນ ສສປ ລາວ ເຮົາແມ່ນຈະສຸມໃສ່ການຫລຸດຜ່ອນຄວາມທຸກຍາກໃນທ້ອງຖິ່ນ ໂດຍການ ສະໜັບສະໜູນໃຫ້ປະຊາຊົນເລືອກພັດທະນາຜະລິດຕະພັນທີ່ເຮັດຈາກວັດຖຸດິບໃນຊຸມຊົນ ແລະ ນຳໃຊ້ ຄວາມສະຫລາດຫລັກແຫລມຂອງຊຸມຊົນໃນການພັດທະນາສິນຄ້າໃຫ້ມີເອກະລັກເພື່ອສ້າງມູນຄ່າເພີ້ມ ແລະ ສາມາດຂາຍໃນຕະຫລາດພາຍໃນ ແລະ ຕ່າງປະເທດໄດ້.

ສະຖາບັນຄົ້ນຄ້ວາເສດຖະກິດ ການຄ້າ (ສສຄ), ກະຊວງອຸດສາຫະກຳ ແລະ ການຄ້າເປັນ ໜ່ວຍງານ ໜຶ່ງທີ່ໄດ້ຮັບການມອບໝາຍໃນການຕິດຕາມ ແລະ ອຳນວຍຄວາມສະດວກໃຫ້ກັບການ ປະຕິບັດ ໂຄງການຕົວແບບໃນການພັດທະນາ ວຽກງານໜຶ່ງເມືອງ ໜຶ່ງຜະລິດຕະພັນ ທີ່ ແຂວງສະຫວັນ ນະເຂດ ແລະ ແຂວງສາລະວັນ ຊຶ່ງໄດ້ຮັບການສະໜັບສະໜູນໂດຍລັດຖະບານຍີ່ປຸ່ນ.  ໂຄງການພັດທະນາ ຕົວແບບນີ້ ໄດ້ປະກອບສ່ວນໃນການຖ່າຍທອດທັກສະ ແລະ ການນຳໃຊ້ຊັບພະຍາກອນ ທ້ອງຖິ່ນທີ່ມີ ໃຫ້ເກີດປະສິດຕິຜົນ ແລະ ສ້າງມູນຄ່າເພີ້ມໃຫ້ກັບຜະລິດຕະພັນ.  ປະຊາຊົນທ້ອງຖິ່ນຈະໄດ້ຮຽນຮູ້ ບົດຮຽນໃນການນຳໃຊ້ຊັບພະຍາກອນແບບຍືນຍົງ ແລະ ສາມາດພັດທະນາໃຫ້ການຜະລິດສາມາດ ສົ່ງອອກໄປທ້ອງຖິ່ນອື່ນ ພ້ອມທັງຂາຍໃຫ້ນັກທ່ອງທ່ຽວກັບທີ່.

ວຽກງານ ODOP ນີ້ຍັງສາມາດສະໜັບສະໜູນຜູ້ຜະລິດ ແລະ ທຸລະກິດຂະໜາດນ້ອຍ ແລະ ກາງໃຫ້ເຂົ້າໃຈເຖິງຄວາມຕ້ອງການຂອງຕະຫລາດ ແທນທີ່ຈະມຸ່ງເນັ້ນແຕ່ການຜະລິດສິນຄ້າທີ່ທ້ອງຖິ່ນສາມາດ ຜະລິດໄດ້. ໃນໄລຍະຜ່ານມາ, ພວກເຮົາເຫັນວ່າ ຜູ້ຜະລິດ ຫລື ຊາວກະສິກອນຈະພົບກັບບັນຫາ ເລື່ອງການຂາຍສິນຄ້າທີ່ຕົນຜະລິດໄດ້ເນື່ອງຈາກ  ຜະລິດຕະພັນທີ່ເຂົາເຈົ້າຜະລິດແມ່ນອີງໃສ່ຄວາມສາມາດທີ່ເຂົາເຈົ້າຜະລິດໄດ້ ແຕ່ບໍ່ໄດ້ໝາຍຄວາມວ່າສິນຄ້າຈະເປັນທີ່ຕ້ອງ ການແກ່ຕະຫລາດ.  ດັ່ງນັ້ນ, ການພັດທະນາວຽກງານ



ODOP
ONE DISTRICT ONE PRODUCT
PILOT PROJECT OF JICA

ODOP ນີ້ຈະເປັນເຄື່ອງມືອັນໜຶ່ງທີ່ດຶງເອົາຊ່ຽວຊານມາຊ່ວຍຜູ້ຜະລິດຢູ່ ທ້ອງຖິ່ນໃນການສຶກສາຕະຫລາດ, ນຳພາໃນການອອກແບບຜະລິດຕະພັນ, ແລະ ຜະລິດສິນຄ້າອີງໃສ່ ຄວາມຕ້ອງການຂອງຜູ້ຊົມໃຊ້ ແລະ ຄວາມຕ້ອງການຂອງຕະຫລາດ.  ການພັດທະນາວຽກງານ ODOP ຈະຊ່ວຍໃຫ້ຜູ້ຜະລິດທີ່ໄດ້ຮັບ ການຝຶກອົບຮົມສາມາດແລກປ່ຽນບົດຮຽນກັບບັນດາຜູ້ຜະລິດໃນແຂວງ ອື່ນໆເພື່ອເຮັດໃຫ້ມີຜະລິດຕະພັນຢູ່ບັນດາເມືອງ ແລະ ແຂວງອື່ນໆສາມາດພັດທະນາຄຸນນະພາບ ໄດ້ອີກ.

ສືບເນື່ອງຈາກໂຄງການພັດທະນາຕົວແບບດັ່ງກ່າວ, ແນວຄວາມຄິດຂອງວຽກງານພັດທະນາ ODOP ໄດ້ຂະຫຍາຍໄປທົ່ວປະເທດ.  ສະຖາບັນຄົ້ນຄ້ວາເສດຖະກິດການຄ້າໄດ້ຈັດກອງປະຊຸມ ສຳມະນາ ເຜີຍແຜ່ເນື້ອໃນຈິດໃຈຂອງຄວາມສຳຄັນຂອງວຽກງານພັດທະນາ ODOP ທົ່ວປະເທດ, ໂດຍການ ສະໜັບສະໜູນທຶນຂອງໂຄງການຊ່ວຍເຫຼືອລ້າຫລາຍຝ່າຍເພື່ອການພັດທະນາການຄ້າ (TDF) ຜ່ານໜ່ວຍງານຈັດຕັ້ງປະຕິບັດໂຄງການຍ່ອຍສັງກັດຢູ່ ສສຄ, ຊຶ່ງໄດ້ນຳເອົາບົດຮຽນຈາກປະເທດຍີ່ປຸ່ນ, ປະເທດໄທ ແລະ ບົດຮຽນຂອງໂຄງການຕົວແບບຢູ່ແຂວງສະຫວັນນະເຂດ ແລະ ສາລະວັນໄປແລກປ່ຽນກັບແຂວງພາກເໜືອ, ພາກກາງ ແລະ ພາກໃຕ້ຂອງ ສສປ ລາວ.



*ສຳລັບຂໍ້ມູນເພີ້ມເຕີມ, ກະລຸນາຕິດຕໍ່ ສະຖາບັນຄົ້ນຄວ້າເສດຖະກິດ ແລະ ການຄ້າ, ກະຊວງອຸດສາ ຫະກຳ ແລະ ການຄ້າ,*
*ໂທ: +856 21 418074,*
*ອີເມລ: erit_rpd@yahoo.com*



# ບົດວິໄຈ

## *ການເຊື່ອມໂຍງເຂົ້າສາກົນທາງການຄ້າ ຂອງ ສປປ ລາວ*

*ໂດຍ: ພະແນກຄຸ້ມຄອງການຊ່ວຍເຫຼືອທາງການ, ກົມນະໂຍບາຍການຄ້າຕ່າງປະເທດ*

**ແຜນພັດທະນາເສດຖະກິດ ແລະ ສັງຄົມ ແຫ່ງຊາດ ຄັ້ງທີ 7: ການເຊື່ອມໂຍງທາງດ້ານເສດຖະກິດ ແລະ ການຂະຫຍາຍຕົວທາງດ້ານການສົ່ງອອກໃຫ້ບັນລຸ 18% ຕໍ່ປີ**

“ແຜນພັດທະນາເສດຖະກິດ ແລະ ສັງຄົມ ແຫ່ງຊາດຄັ້ງທີ 7 ຖືເອົາການເຊື່ອມໂຍງທາງດ້ານເສດຖະກິດ ແລະ ການຄ້າ ເປັນກຸນແຈສໍາຄັນໃນການເຕີບໂຕ ແລະ ພັດທະນາ ສປປລາວ ໂດຍແນໃສ່ຂະຫຍາຍການສົ່ງອອກ ແລະ ນໍາເຂົ້າໃຫ້ບັນລຸ 18% ແລະ 8% ຕໍ່ປີ ຕາມລໍາດັບ. ຊຶ່ງໃນນັ້ນ ການສ້າງບົດວິໄຈການເຊື່ອມໂຍງເຂົ້າສາກົນດ້ານການຄ້າຂອງ ສປປ ລາວ ໃນປີ 2011 (DTIS) ແມ່ນໜຶ່ງໃນກົນໄກການຈັດຕັ້ງປະຕິບັດຍຸດທະສາດທາງດ້ານການຄ້າໃນແຜນພັດທະນາເສດຖະກິດ ແລະ ສັງຄົມແຫ່ງຊາດດັ່ງກ່າວ. ການປັບປຸງບົດວິໄຈການເຊື່ອມໂຍງເຂົ້າສາກົນດ້ານການຄ້າ ຈະອີງໃສ່ບັນດາຍຸດທະສາດທີ່ມີຢູ່ແລ້ວ ເຊັ່ນ: ຍຸດທະສາດການສົ່ງອອກແຫ່ງຊາດ, ຍຸດທະສາດສໍາລັບວິສາຫະກິດຂະໜາດນ້ອຍ, ຍຸດທະສາດກ່ຽວກັບການອໍານວຍຄວາມສະດວກທາງດ້ານການຄ້າ, ແລະ ບັນດາຍຸດທະສາດທີ່ກ່ຽວພັນອື່ນໆ.

ພ້ອມນີ້ ບົດວິໄຈການເຊື່ອມໂຍງດັ່ງກ່າວ ຈະອີງໃສ່ບົດວິໄຈການເຊື່ອມໂຍງເຂົ້າສາກົນດ້ານການຄ້າ (DTIS) ທີ່ມີຢູ່ແລ້ວ ຊຶ່ງແມ່ນໜຶ່ງໃນກອບໂຄງການເຊື່ອມໂຍງເຂົ້າສາກົນທາງການຄ້າໄລຍະປັບປຸງ (Enhanced Integrated Framework). ບົດວິໄຈນີ້ຈະເປັນການເບິ່ງຄືນກາລະໂອກາດ ແລະ ສິ່ງທ້າທາຍທີ່ກ່ຽວພັນກັບການຄ້າທີ່ ສປປ ລາວ ພົບພໍ້ ແລະ ກໍານົດບັນດາບູລິມະສິດ ແລະ ກິດຈະກໍາທີ່ຈໍາເປັນເພື່ອແກ້ໄຂບັນດາສິ່ງທ້າທາຍ ແລະ ກໍານົດມາດຕະການເພື່ອໃຫ້ບັນລຸໄດ້ກາລະ ໂອກາດດ້ານການຄ້າ. ພ້ອມນີ້ຈະເປັນການປະເມີນສະຖານະໃນປະຈຸບັນ ແລະ ວິເຄາະບັນຫາທີ່ ສປປ ລາວ ອາດຈະພົບພໍ້ໃນຕໍ່ໜ້າ ເປັນຕົ້ນວ່າ ຕ້ອງນໍາໃຊ້ຍຸດທະສາດໃດ ເພື່ອໃຫ້ການເຂົ້າເປັນສະມາຊິກອົງການ ການຄ້າໂລກ ໄດ້ຮັບຜົນປະໂຫຍດສູງສຸດ, ຜົນກະທົບຂອງການຂະຫຍາຍຕົວຂອງການສົ່ງອອກ ຊັບພະຍາກອນທໍາມະຊາດ ເຊັ່ນ ແຮ່ທາດ ແລະ ໄຟຟ້າ ຕໍ່ກັບຂະແໜງການສົ່ງອອກອື່ນໆ, ຂະແໜງການສົ່ງອອກໃດມີທ່າແຮງໃນການພັດທະນາ ແລະ ເຮັດແນວໃດເພື່ອປັບປຸງຄວາມສາມາດ ໃນການແຂ່ງຂັນຂອງຜູ້ສົ່ງອອກ.

### ການຮ່າງບົດວິໄຈ ການເຊື່ອມໂຍງເຂົ້າສາກົນດ້ານການຄ້າ

ບົດວິໄຈການເຊື່ອມໂຍງເຂົ້າສາກົນດ້ານການຄ້າ ຈະສ້າງຂຶ້ນພາຍໃຕ້ກອບການເຊື່ອມໂຍງເຂົ້າສາກົນທາງການຄ້າ ຫຼື IF Process. ເປົ້າໝາຍລວມຂອງຂະບວນການ IF ແມ່ນເພື່ອສະໜັບສະໜູນໃຫ້ພາກລັດຖະບານ, ພາກເອກະຊົນ ແລະ ຄູ່ຮ່ວມພັດທະນາເພື່ອຊຸກຍູ້ການຂະຫຍາຍຕົວຂອງເສດຖະກິດໂດຍຜ່ານການສົ່ງເສີມການເຊື່ອມໂຍງດ້ານການຄ້າ ແລະ ຂະຫຍາຍການສົ່ງອອກ. ພາຍໃຕ້ກອບການເຊື່ອມໂຍງເຂົ້າສາກົນທາງການຄ້າໄລຍະປັບປຸງ (Enhanced Integrated Framework- EIF), ລັດຖະບານຈະເປັນເຈົ້າການໃນການຮ່າງບົດວິໄຈການເຊື່ອມໂຍງເຂົ້າສາກົນ ດ້ານການຄ້າ (DTIS) ຊຶ່ງການຮ່າງບົດດັ່ງກ່າວແມ່ນໄດ້ຮັບການສະໜັບສະໜູນໂດຍກອງທຶນຈາກໂຄງການ EIF ແລະ ສປປ ລາວ ຫາກໍ່ໄດ້ຮັບອະນຸມັດງົບປະມານມູນຄ່າ 400,000 ໂດລາສະຫະລັດສໍາລັບວຽກງານດັ່ງກ່າວ. ການຮ່າງບົດດັ່ງກ່າວແມ່ນນໍາພາໂດຍລັດຖະບານຮ່ວມກັບພາກສ່ວນທີ່ກ່ຽວຂ້ອງພ້ອມທັງທີ່ປຶກສາພາຍໃນ ແລະ ຕ່າງປະເທດ.

ທ່ານ ນາງ ເຂັມມະນີ ພົນເສນາ, ລັດຖະມົນຕີຊ່ວຍວ່າການກະຊວງອຸດສະຫະກຳ ແລະ ການຄ້າ ຈະເປັນຜູ້ນຳພາຂະບວນການຮ່າງບົດວິໄຈດັ່ງກ່າວ ຮ່ວມກັບກະຊວງແຜນການ ແລະ ການລົງທຶນ ແລະ ບັນດາກະຊວງທີ່ກ່ຽວຂ້ອງ, ຕົວແທນຈາກພາກເອກະຊົນ ແລະ ອົງການສາກົນຕ່າງໆ ຊຶ່ງປະກອບເປັນຄະນະຊີ້ນຳການຊຽນບົດວິໄຈ (Review Committee). ຊຶ່ງໃນນີ້ ຄະນະຈະປະກອບດ້ວຍສະມາຊິກຂອງໜ່ວຍງານຍ່ອຍຂະແໜງການຄ້າ ແລະ ເອກະຊົນ (Trade and Private Sector Development Sub-Group) ພ້ອມກັບສະມາຊິກຈຳນວນໜຶ່ງຈາກກອງເລຂາການເຊື່ອມໂຍງເຂົ້າສາກົນດ້ານການຄ້າເປັນຕົ້ນແມ່ນ ກະຊວງການເງິນ, ກະຊວງກະສິກຳ ແລະ ປ່າໄມ້, ອົງການວິທະຍາສາດ ແລະ ເຕັກໂນໂລຢີແຫ່ງຊາດ, ຕົວແທນສະມາຄົມຈາກພາກເອກະຊົນ ແລະ ອົງການສາກົນ ຕ່າງໆ ທີ່ເຮັດວຽກຕິດພັນກັບການພັດທະນາການຄ້າ ແລະ ພາກເອກະຊົນໃນ ສປປ ລາວ.

## ອົງປະກອບຂອງເນື້ອໃນບົດວິໄຈ

ຄະນະຊີ້ນຳການຊຽນບົດດັ່ງກ່າວ ຈະເປັນຜູ້ກວດກາຮ່າງຂອງແຕ່ລະບົດທີ່ຈະປະກອບໃນບົດວິໄຈການເຊື່ອມໂຍງເຂົ້າສາກົນດ້ານການຄ້າ. ອີງຕາມການປຶກສາຫາລືກັບພາກສ່ວນທີ່ກ່ຽວຂ້ອງ, ການຮ່າງບົດວິໄຈໃນຄັ້ງນີ້ ຈະແບ່ງອອກເປັນສາມພາກ. ພາກທຳອິດແມ່ນການວິໄຈການພັດທະນາການຄ້າ ແລະ ພາກເອກະຊົນໂດຍລວມ ເຊິ່ງຈະເນັ້ນໜັກການເຊື່ອມສານຂອງການຄ້າໃນ ສປປ ລາວ ພ້ອມທັງລະບົບການປະສານງານເພື່ອນຳໃຊ້ແຫຼ່ງທຶນໃນຂະແໜງການຄ້າໃຫ້ມີປະສິດທິຜົນ, ທວນຄືນລະບົບເສດຖະກິດມະຫາພາກ ລວມເຖິງໂຄງສ້າງທາງດ້ານນະໂຍບາຍແລະ ສະຖາບັນທີ່ຕິດພັນກັບວຽກງານການລົງທຶນ ແລະ ການຄ້າ. ໃນພາກນີ້ ກໍ່ຈະລົງເລິກລາຍລະອຽດການກຽມຕົວເຂົ້າເປັນສະມາຊິກອົງການການຄ້າໂລກໃນອະນາຄົດອັນໃກ້ ພ້ອມທັງ ພາຍຫຼັງການເປັນສະມາຊິກແລ້ວ. ພ້ອມນີ້ ກໍ່ຈະເບິ່ງບັນຫາຕ່າງໆຂອງການຄ້າພາຍໃນພາກພື້ນ ເຊັ່ນ ອາຊຽນ ແລະ ການເຈລະຈາສອງຝ່າຍອີກດ້ວຍ.

ພາກທີສອງຈະລົງເລິກບັນຫາທີ່ຕິດພັນກັບການພັດທະນາການຄ້າ ແລະ ພາກເອກະຊົນ ເຊັ່ນ ວຽກງານອຳນວຍຄວາມສະດວກດ້ານການຄ້າ (ລວມເຖິງການຂົນສົ່ງ, ພາສີ, ສຸຂະນາໄມພືດ ແລະ ສັດ), ສະພາບແວດລ້ອມທາງດ້ານທຸລະກິດ, ການພັດທະນາທຸລະກິດຂະໜາດນ້ອຍ ແລະກາງ ບັນຫາໃໝ່ທາງດ້ານການຄ້າ ເຊັ່ນ ບັນຫາຊັບສິນທາງປັນຍາ, ການຄຸ້ມຄອງຜູ້ບໍລິໂພກ, ແລະ ການຄ້າແບບຍືນຍົງທີ່ເຊື່ອມໂຍງເຖິງຄວາມທຸກຍາກ, ບົດບາດຍິງຊາຍ ແລະ ສິ່ງແວດລ້ອມ.

ພາກສຸດທ້າຍແມ່ນຈະເນັ້ນໃສ່ປັບປຸງແຜ່ນປະຕິບັດງານຕົວຈິງຂອງຍຸດທະສາດການສົ່ງອອກແຫ່ງຊາດ ລວມເຖິງການວິໄຈ ແລະ ສ້າງຍຸດທະສາດສຳລັບຂະແໜງບູລິມະສິດໃນການພັດທະນາໃນຕໍ່ໜ້າ.

ບົດວິໄຈການເຊື່ອມໂຍງເຂົ້າສາກົນດ້ານການຄ້າຂອງ ສປປ ລາວ (DTIS) ສະບັບປີ 2006 ເປັນເອກະສານພື້ນຖານທີ່ສຳຄັນໃນການແກ້ໄຂສິ່ງທ້າທາຍທາງການຄ້າ ແລະ ພ້ອມທັງເປັນການລິເລີ່ມການພັດທະນາໂຄງການຊ່ວຍເຫຼືອທີ່ສຳຄັນຕ່າງໆ ເຊັ່ນ ໂຄງການຊ່ວຍເຫຼືອລ້າຫຼາຍຝ່າຍເພື່ອການພັດທະນາ (TDF) ມູນຄ່າ 6.8 ລ້ານໂດລາ, ໂຄງການ IF Window II, ໂຄງການຊ່ວຍເຫຼືອຂອງປະເທດສະວິດເຊີແລນ ມູນຄ່າ 4 ລ້ານໂດລາ ແລະ ອື່ນໆ. ບົດວິໄຈການເຊື່ອມໂຍງ ເຂົ້າສາກົນດ້ານການຄ້າທີ່ຈະມີການປັບປຸງໃນຄັ້ງນີ້ ກໍ່ຈະເປັນເອກະສານສຳຄັນເຊັ່ນດຽວກັນໃນການສ້າງຍຸດທະສາດ ແລະ ກິດຈະກຳບູລິມະສິດເພື່ອດຶງດູດ ແລະ ໃຫ້ແນວທາງໃນການນຳໃຊ້ແຫຼ່ງທຶນ ແລະ ການປະຕິຮູບເພື່ອຊ່ວຍໃນການສ້າງລະບົບໂຄງການແບບລວມສູນ ໃນການພັດທະນາການຄ້າ ແລະ ພາກເອກະຊົນໃນ ສປປ ລາວ.

## ໄລຍະເວລາ

ກອງປະຊຸມຂອງຄະນະຊີ້ນຳການຊຽນບົດວິໄຈ (Review Committee) ຄາດວ່າຈະຖືກຈັດຂຶ້ນໃນເດືອນ ກຸມພາ ປີ 2011. ຫຼັງຈາກນັ້ນ ຈະເລີ່ມການຈັດຈ້າງທີ່ປຶກສາພາຍໃນ ແລະ ຕ່າງປະເທດ ແລະ ຈັດສັນສະມາຊິກໃນຂະແໜງການທີ່ກ່ຽວຂ້ອງເພື່ອເລີ່ມການຮ່າງ ແລະ ປັບປຸງບົດວິໄຈການເຊື່ອມໂຍງເຂົ້າສາກົນດ້ານການຄ້າໃນໄຕມາດທຳອິດຂອງປີ 2011. ຄາດວ່າຮ່າງບົດວິໄຈຈະສຳເລັດໃນລະຫວ່າງໄຕມາດທີສອງ, ຫຼັງຈາກນັ້ນ ຈະມີການປຶກສາຫາລືເພື່ອກວດກາ ແລະ ກວດແກ້ ແລະ ຄາດວ່າບົດຈະສຳເລັດສົມບູນ ແລະ ຖືກຮັບຮອງເອົາຢ່າງເປັນທາງການໃນໄຕມາດທີສາມ ຫຼື ໄຕມາດສຸດທ້າຍຂອງປີ 2011.

ພວກເຮົາຫວັງຢ່າງຍິ່ງວ່າຈະໄດ້ຮັບການຮ່ວມມືກັບທຸກພາກສ່ວນທີ່ກ່ຽວຂ້ອງໃນການຮ່າງບົດວິໄຈນີ້ ແລະ ຫວັງວ່າຈະໄດ້ຮັບການສະໜັບສະໜູນຈາກທຸກພາກສ່ວນໃນການຈັດຕັ້ງປະຕິບັດບັນດາແຜນວຽກບຸລິມະສິດຂອງບົດວິໄຈດັ່ງກ່າວໃຫ້ບັນລຸຜົນຕາມທີ່ຄາດໝາຍໄວ້.

# ທິດທາງ ການນຳເຂົ້າ ແລະສົ່ງອອກ ຂອງ ສປປ ລາວ

*ໂດຍ: ພະແນກຄຸ້ມຄອງການຊ່ວຍເຫລືອທາງການ, ກົມນະໂຍບາຍການຄ້າຕ່າງປະເທດ*

ໃນທິວຂໍ້ນີ້ຈະໄດ້ສະແດງບາງທິດທາງຂອງການສົ່ງອອກແລະນຳເຂົ້າລະຫວ່າງ ສປປ ລາວ ແລະບັນດາຄູ່ຮ່ວມທຸລະກິດ. ເສັ້ນສະແດງໄດ້ມີການປ່ຽນແປງທິດທາງຂອງມູນຄ່າການຄ້າຕະຫຼອດ 10ປີທີ່ຜ່ານມາ ແລະພ້ອມທັງສະແດງໃຫ້ເຫັນຂໍ້ມູນຂອງແຕ່ລະໄຕມາດ

## ທິດທາງການນຳເຂົ້າ

ໃນໄລຍະທົດສະວັດທີ່ຜ່ານມາ: ຄາດຄະເນມູນຄ່າການນຳເຂົ້າໃນ ສປປ ລາວ ແມ່ນປະມານ 2.9 ຕື້ ໂດລາ ໃນປີ 2009 ເຊິ່ງສະແດງໃຫ້ເຫັນການເພີ້ມຂຶ້ນຂອງການນຳເຂົ້າຫລາຍກວ່າ 4 ເທົ່າຕົວເມື່ອທຽບໃສ່ມູນຄ່າການນຳເຂົ້າໃນປີ 2000. ໃນໄລຍະດັ່ງກ່າວການນຳເຂົ້າຈາກປະເທດໄທກວມເອົາຫລາຍກວ່າ 60 ສ່ວນຮ້ອຍຂອງການນຳເຂົ້າທັງໝົດ. ໃນໄລຍະຊຸມ

ປີຜ່ານມານີ້, ການນຳເຂົ້າຈາກປະເທດ ສປ ຈີນ ໄດ້ມີການເພີ້ມຂຶ້ນຢ່າງຕໍ່ເນື່ອງ ເຊິ່ງສາມາດເຫັນໄດ້ຈາກການເພີ້ມຂຶ້ນຂອງມູນຄ່າການນຳເຂົ້າຈາກ 5 ສ່ວນຮ້ອຍ ເປັນ 14 ສ່ວນຮ້ອຍຂອງການນຳເຂົ້າທັງໝົດໃນ ສປປ ລາວ ເຊິ່ງມີມູນຄ່າເພີ້ມ ຂຶ້ນເຖິງ 10 ເທົ່າຕົວ (376 ລ້ານ ໂດລາ) ເມື່ອທຽບໃສ່ມູນຄ່າໃນປີ 2000.

ທິດທາງການນຳເຂົ້າໃນປະຈຸບັນ: ຕົວເລກການນຳເຂົ້າໂດຍລວມແມ່ນເພີ້ມຂຶ້ນທຸກໆ ໄຕມາດນັບແຕ່ໄຕມາດທີ 1 ປີ 2009 ເຖິງໄຕມາດທີ 1 ປີ 2010, ແຕ່ໃນທາງກົງກັນຂ້າມມູນຄ່າຂອງການນຳເຂົ້າແມ່ນຫລຸດລົງ ເຖິງ 87 ລ້ານໂດລາ ໃນໄຕມາດທີ 2 ຂອງປີ 2010. ສາເຫດຂອງການຫລຸດລົງຂອງມູນຄ່າການນຳເຂົ້າແມ່ນເນື່ອງມາຈາກການຫລຸດການນຳເຂົ້າສິນຄ້າຈາກປະເທດໄທ ແລະປະເທດ ສປ ຈີນ ໃນໄລຍະດັ່ງກ່າວ. ເຖິງຢ່າງໃດກໍ່ຕາມ, ການນຳເຂົ້າຈາກຫວຽດນາມຂ້ອນຂ້າງຄົງທີ່, ໃນຂະນະທີ່ການສົ່ງອອກຈາກປະເທດສະຫະພາບເອີລົບສູ່ປະເທດລາວເພີ້ມຂຶ້ນ ແລະຫລຸດລົງຢ່າງໄວວາ ໃນມາດຕາ 3 ຂອງປີ 2009.

ຕົວເລກການນຳເຂົ້າປະຈຳປີຂອງ ສປປ ລາວ (ຈາກສາກົນ ແລະ ປະເທດໄທ) (ລ້ານໂດລາ)




ແຫລ່ງນຳເຂົ້າ 5 ອັນດັບຕົ້ນ ຂອງ ສປປ ລາວ(ບໍ່ລວມປະເທດໄທ) (ລ້ານໂດລາ)




ແຫລ່ງຂໍ້ມູນ: IMF DOT

ການນຳເຂົ້າຂອງ ສປປ ລາວ ປະຈຳໄຕມາດ (ຈາກສາກົນ ແລະ ປະເທດໄທ) (ລ້ານ ໂດລາ)




ແຫລ່ງນຳເຂົ້າ 5ອັນດັບຕົ້ນ ປະຈຳໄຕມາດ (ບໍ່ລວມປະເທດໄທ) (ລ້ານໂດລາ)




ແຫລ່ງຂໍ້ມູນ: IMF DOT

## ທິດທາງການສົ່ງອອກ

**ໃນໄລຍະທົດສະວັດທີ່ຜ່ານມາ**: ການຂະຫຍາຍຕົວທາງດ້ານເສດຖະກິດຂອງ ສປປ ລາວ ເລີ່ມດີຂຶ້ນເມື່ອການຂະຫຍາຍຕົວທາງດ້ານການສົ່ງອອກໄດ້ເພີ່ມຂຶ້ນຢ່າງໄວວາ, ເມື່ອເບິ່ງຄືນໄລຍະ 10 ປີຜ່ານມາ, ເຫັນວ່າການສົ່ງອອກມີການເພີ້ມຂຶ້ນເກືອບ 4 ເທົ່າຕົວ ຈາກປະມານ 400 ລ້ານ ໂດລາ ໃນປີ 2000 ເຖິງຈຸດສູງສຸດ 1.6 ຕື້ ໂດລາ ໃນປີ 2008. ເຖິງຢ່າງໃດກໍ່ຕາມ, ວິກິດການເສດຖະກິດໂລກໄດ້ສົ່ງຜົນກະທົບໃຫ້ການສົ່ງອອກຫລຸດລົງໃນປີ 2009 ແລະ ປີ 2010. ນັບຈາກກາງທົດສະວັດເປັນຕົ້ນມາ, ປະເທດໄທໄດ້ປ່ຽນແທນ ສະຫະພາບເອີລົບໃນການເປັນຈຸດໝາຍສຳຄັນສຳລັບການສົ່ງອອກຂອງ ສປປ ລາວ. ການສົ່ງອອກສູ່ປະເທດ ສສ ຫວຽດນາມ ແລະ ສະຫະພາບເອີລົບ ໄດ້ມີການເພີ້ມຂຶ້ນ ແຕ່ ສປ ຈີນ ຖືເປັນຕະຫລາດສົ່ງອອກທີ່ຂະຫຍາຍຕົວໄວທີ່ສຸດສຳລັບ ສປປ ລາວ.

ທິດທາງການສົ່ງອອກໃນປະຈຸບັນ: ມູນຄ່າການສົ່ງອອກມີການເພີ້ມຂຶ້ນຢ່າງຕໍ່ເນື່ອງໃນຊຸມປີຜ່ານມາ. ການສົ່ງອອກໄດ້ມີການຂະຫຍາຍຕົວຢ່າງເຂັ້ມແຂງສຳລັບປະເທດໄທ, ສປ ຈີນ ແລະ ສະຫະພາບເອີລົບ, ແຕ່ ປະເທດ ສປ ຈີນ ໄດ້ແທນທີ່ ປະເທດໄທໃນການເປັນປະເທດສົ່ງອອກອັນດັບດັບ 1 ຂອງ ສປປ ລາວ ໃນໄຕມາດທີ 2 ຂອງປີ 2010.

ການສົ່ງອອກປະຈຳປີຂອງ ສປປ ລາວ (ລ້ານໂດລາ)




ການສົ່ງອອກທັງໝົດປະຈຳປີຂອງ ສປປ ລາວ (ລ້ານ ໂດລາ)




ແຫລ່ງຂໍ້ມູນ: IMF DOT

ການສົ່ງອອກປະຈຳໄຕມາດຂອງ ສປປ ລາວ
(5 ປະເທດທີ່ສົ່ງອອກສູງສຸດ) (ລ້ານ ໂດລາ)




ການສົ່ງອອກທັງໝົດ ຂອງ ສປປ ລາວ ປະຈຳໄຕມາດ (ລ້ານ ໂດລາ)




ແຫລ່ງຂໍ້ມູນ: IMF DOT

Ministry of Industry and Commerce Foreign Trade Policy Department

# LAO TRADE MAGAZINE

Issue: 4 January

**LAO PDR**
TO HOST THE 17TH AEM RETREAT IN FEBRUARY 2011



**LAO PDR-CHINA**
TRADE RELATIONS



**TRADE**
FACILITATION

# CONTENTS

Welcome to the fourth edition of the

**Lao Trade Magazine.**

Our current edition of the trade magazine highlights the ongoing effort of the government in trade development related work. This includes preparations for a Lao Diagnostic Trade Integration Study (DTIS), including a review of opportunities and constraints that Laos faces with regard to international trade. The magazine also pinpoints the importance of Trade Facilitation, the Custom Valuation Agreement under WTO Agreements, the development of the One District One Product (ODOP) scheme and work on public-private sector support such as the Sustainable Silk Development Project and the Garment Training Centre sub-projects of the Multi-Donor Trade Development Facility.

We hope you enjoy the articles in our latest edition of the magazine. We look forward to your feedback and suggestion on articles you would like to be covered in future editions.


PAGE 4

**LAO PDR TO HOST THE 17TH AEM RETREAT IN FEBRUARY 2011**

PAGE 5-7

**LAO PDR-CHINA TRADE RELATION**

PAGE 8-9

**CUSTOMS VALUATION AGREEMENT**

PAGE 10-13

**THE GARMENT SERVICE CENTRE AND SUSTAINABLE SILK PRODUCTION PROJECTS**

PAGE 14-16

**TRADE FACILITATION**

PAGE 17-18

**ONE DISTRICT ONE PRODUCT (ODOP) MOVEMENT**

PAGE 19-20

**THE LAO PDR TRADE INTEGRATION STRATEGY**

PAGE 21-22

**TRADE SOURCE AND DESTINATION TRENDS**



Ministry of Industry and Commerce
Foreign Trade Policy Department

NIU
National Implementation Unit
Trade & Private Sector Development

Phonxay Road, PO Box 4107,
Vientiane Lao PDR
Tel/Fax: (856 21) 41 3916
info@laosaft.org
www.laosaft.org
Supported by: EIF

## ONE DISTRICT ONE PRODUCT

# ODOP

## MOVEMENT

*By: the Economic Research Institute for Trade*

The "One District One Product (ODOP)" movement is a key community development programme. The concept was originally established in the Oita Prefecture by the Japanese Government, and is now operational in many countries including Lao PDR. ODOP can generate income and increased employment in rural areas and can assist in reducing labour migration from rural to urban areas. The overall concept of the ODOP movement focuses on poverty reduction at the local area by supporting villagers to select competitive products made from local materials, using local wisdom, creativity and unique skills in order to produce and sell unique products with true value aimed at both the domestic and global markets.

